# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-23 ມັງກອນ 2024

ປີທີ 13

ສະບັບທີ 954

ລາຍສັບປະດາ


## ຮອງປະທານສະພາແຫ່ງຊາດ ຕ້ອນຮັບລັດຖະມົນຕີກະຊວງການຟື້ນຟູຍີ່ປຸ່ນ

(ສພຊ) ໃນວັນທີ 11 ມັງກອນ 2024 ທີ່ຫ້ອງຮັບແຂກສະພາແຫ່ງຊາດ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ນາງ ຊືຈິຢະ ຊິນະໂກະ (TSUCHIYA Shinako) ລັດຖະມົນຕີກະຊວງການຟື້ນຟູ, ປະທານຄະນະມິດຕະພາບລັດຖະສະພາຍີ່ປຸ່ນ-ລາວ ພ້ອມດ້ວຍຄະນະ ເນື່ອງໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ.



ໂອກາດນີ້, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ກ່າວສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ພ້ອມທັງຕີລາຄາສູງຕໍ່ການຢ້ຽມຢາມຄັ້ງນີ້ຂອງທ່ານ ນາງ ຊືຈິຢະ ຊິນະໂກະ ເຊິ່ງເປັນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມທີ່ມີມາແຕ່ດົນນານ ກໍຄືການເປັນຄູ່ຮ່ວມຍຸດທະສາດລະຫວ່າງ ສປປ ລາວ ແລະ ຍີ່ປຸ່ນ ເວົ້າລວມ, ເວົ້າສະເພາະ ລະຫວ່າງສອງອົງການນິຕິບັນຍັດ ໃຫ້ນັບມື້ນັບຂະຫຍາຍຕົວຍິ່ງໆຂຶ້ນ; ທ່ານໄດ້ສະແດງຄວາມເຫັນໃຈຕໍ່ລັດຖະບານ ແລະ ປະຊາຊົນຍີ່ປຸ່ນ ໃນເຫດການແຜ່ນດິນໄຫວຢູ່ປະເທດຍີ່ປຸ່ນໃນຕົ້ນເດືອນມັງກອນທີ່ຜ່ານມາ, ອັນໄດ້ກໍ່ໃຫ້ເກີດຄວາມເສຍຫາຍແກ່ຊີວິດ

ອ່ານຕໍ່ໜ້າ 4




## ທ່ານ ສົມມາດ ພົລເສນາ ເຮັດວຽກກັບ ສພຂ ອັດຕະປື



(ສພຊ) ວັນທີ 14 ມັງກອນ 2024, ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ສະພາປະຊາຊົນແຂວງ (ສພຂ) ອັດຕະປື ໂດຍມີທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງ, ບັນດາທ່ານຮອງປະທານ, ຄະນະກຳມະການ ແລະ ຄະນະເລຂາທິການ ສພຂ ໃຫ້ການຕ້ອນຮັບຢ່າງອົບອຸ່ນ.

ໃນການເຮັດວຽກກັບສະພາປະຊາຊົນແຂວງ, ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ລາຍງານສະພາບລວມໂດຍຫຍໍ້ໃນການຈັດຕັ້ງປະຕິບັດວຽກງານ; ຈາກນັ້ນ, ທ່ານຮອງປະທານສະພາແຫ່ງຊາດ ໄດ້ມີຄຳເຫັນໂດຍໃຫ້ເອົາໃຈໃສ່ຕິດຕາມຊຸກຍູ້ເປັນຕົ້ນໃນຂົງເຂດວຽກງານສຶກສາ ແລະ ສາທາລະນະສຸກ ໂດຍສະເພາະການປະລະການຮຽນ ແລະ ກອງທຶນປະກັນສຸຂະພາບ.

ໃນໂອກາດນີ້, ໄດ້ມີພິທີມອບ-ຮັບອຸປະກອນໄຟຟ້າແສງອາທິດ (ໂຊລາເຊວ) ໃຫ້ແກ່ໂຮງຮຽນສາມັນກິນນອນຊົນເຜົ່າແຂວງອັດຕະປືຈຳນວນ 10 ຊຸດ ມູນຄ່າ 67 ລ້ານກວ່າກີບ ໂດຍການກ່າວມອບຂອງທ່ານ ສົມມາດ ພົລເສນາ ແລະ ກ່າວຮັບຂອງທ່ານ ນາງ ທົງຄຳ ຊາພັກດີ ຜູ້ອຳນວຍການໂຮງຮຽນສາມັນກິນນອນຊົນເຜົ່າ ເຊິ່ງມີທ່ານປະທານ-ຮອງປະທານ, ຄະນະກຳມະການ, ຄະນະເລຂາ

ອ່ານຕໍ່ໜ້າ 3

## ວາງພວງມາລາລະນຶກເຖິງຜູ້ເສຍສະຫຼະ ໃນບັ້ນຮົບ 3 ບ້ານ ເມືອງທົ່ງມີໄຊ



(ສພຊ) ເພື່ອເປັນການລະນຶກເຖິງຜູ້ເສຍສະຫຼະຊີວິດໃນບັ້ນຮົບ 3 ບ້ານຂອງເມືອງທົ່ງມີໄຊ ຄົບຮອບ 40 ປີ ເປັນອານຸສອນຈາລຶກຄຸນງາມຄວາມດີຂອງພະນັກງານ-ນັກຮົບແລະປະຊາຊົນບັນດາເຜົ່າທີ່ເສຍສະຫຼະຊີວິດໃນສົງຄາມ 3 ບ້ານດັ່ງກ່າວ ຢ່າງອົງອາດກ້າຫານ ເພື່ອປົກປັກຮັກສາປິຕຸພູມ ແລະ ດິນດອນຕອນຫຍ້າອັນສຸດທີ່ຫວງແຫນ ໄວ້ໄດ້ຢ່າງໝັ້ນຄົງ; ໃນລະຫວ່າງວັນທີ 9-10 ມັງກອນ 2024 ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ໄດ້ເຂົ້າຮ່ວມພິທີລະນຶກເຖິງຜູ້ເສຍສະຫຼະຊີວິດໃນບັ້ນຮົບ 3 ບ້ານຂອງເມືອງທົ່ງມີໄຊແຂວງໄຊຍະບູລີຄົບຮອບ 40 ປີ (1984-2024) ໂດຍມີທ່ານ ເພັງນິລັນ ຄຳພັນເພັງ ປະທານສະພາປະຊາຊົນແຂວງໄຊຍະບູລີ, ທ່ານ ພົຕ. ຈັນທອງ ສອນຕະອາດ ຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ບັນດາສະຫາຍຄະນະປະຈຳ ແລະ

ອ່ານຕໍ່ໜ້າ 3

## ຕັ້ງໜ້າເສີມຂະຫຍາຍທາດແທ້ ແລະ ມູນເຊື້ອອັນສະຫງ່າອົງອາດຂອງກອງທັບປະຊາຊົນລາວ

ວັນທີ 20 ມັງກອນ ແມ່ນວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 75 ປີ (20/1/1949-20/1/2024) ເຊິ່ງການສະເຫຼີມສະຫຼອງວັນດັ່ງກ່າວ ໃນປີນີ້ ແມ່ນໃນທ່າມກາງທີ່ທົ່ວພັກ, ທົ່ວລັດ, ທົ່ວກອງທັບ ແລະ ທົ່ວປວງຊົນລາວບັນດາເຜົ່າ ພວມສືບຕໍ່ຜັນຂະຫຍາຍຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກໃນທ້າຍສະໄໝ ຢ່າງເບີກບານມ່ວນຊື່ນ ແລະ ເອກອ້າງທະນົງໃຈເປັນຢ່າງຍິ່ງທີ່ໄດ້ພ້ອມກັນສ້າງຂະບວນການ-ສ້າງຜົນງານກະກຽມກອງປະຊຸມໃຫຍ່ 3 ຂັ້ນຂອງພັກ, ວັນສ້າງຕັ້ງພັກ ປປ ລາວ ຄົບຮອບ 69 ປີ, ວັນຊາດ 2 ທັນວາ ຄົບຮອບ 49 ປີ.

ກ່ອນໜ້ານີ້ 75 ປີ ຄືວັນທີ 20 ມັງກອນ 1949, ກອງທັບລາວອິດສະຫຼະ ເຊິ່ງແມ່ນຕົ້ນກຳເນີດຂອງກອງທັບປົດປ່ອຍ, ກອງທັບປະຊາຊົນລາວ ປັດຈຸບັນ ໄດ້ຮັບການສ້າງຕັ້ງຂຶ້ນຢູ່ເຂດທີ່ໝັ້ນຕາແສງລາວຮຸ່ງ-ພຽງສາ ເມືອງຊຽງຄໍ້ ແຂວງຫົວພັນ ໂດຍແມ່ນປະທານ ໄກສອນ ພົມວິຫານ ທີ່ເຄົາລົບຮັກ ເປັນຜູ້ປະກາດສ້າງຕັ້ງ ແລະ ບັນຊາໂດຍກົງ. ນັ້ນ

ອ່ານຕໍ່ໜ້າ 8

## ກສຕສ ຕິດຕາມກວດກາວຽກງານ ຢູ່ແຂວງຊຽງຂວາງ



(ສພຊ) ໃນລະຫວ່າງວັນທີ 7-10 ມັງກອນ 2024 ທ່ານ ຮສ. ປອ. ລິນຄຳ ດວງສະຫວັນ ກຳມະການສຳຮອງສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ ກ່ຽວກັບໂຄງການທົດລອງຂຸດຄົ້ນແຮ່ທາດ ແລະ ການປຸງແຕ່ງນໍ້າມັນແອັດຊັງເພື່ອຊົມໃຊ້ພາຍໃນຢູ່ແຂວງຊຽງຂວາງ ໂດຍມີກົມວິຊາການທີ່ກ່ຽວຂ້ອງຂອງກະຊວງ ເປັນຕົ້ນ: ກົມຄຸ້ມຄອງບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່; ກົມການຄ້າພາຍໃນ ແລະ ກົມອຸດສາຫະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ; ກົມພາສີ, ກົມປະຕິຮູບລັດວິສາຫະກິດ ແລະ ປະ ກັນໄພ, ກະຊວງການເງິນ ໄດ້ເຂົ້າຮ່ວມເປັນຄະນະລົງເຄື່ອນໄຫວ.

ການລົງເຄື່ອນຕິດຕາມກວດກາຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດໃນຄັ້ງນີ້, ທ່ານ ຮສ. ປອ ລິນຄຳ ດວງສະຫວັນ ພ້ອມດ້ວຍຄະນະ ໄດ້ເຂົ້າພົບທ່ານເຈົ້າແຂວງໆຊຽງຂວາງ ເພື່ອລາຍງານຈຸດປະສົງໃນການເຄື່ອນໄຫວເຮັດວຽກຢູ່ພາຍໃນແຂວງ; ພ້ອມດຽວກັນນັ້ນ, ກໍໄດ້ຈັດກອງປະຊຸມເຮັດວຽກຮ່ວມກັບສະພາປະຊາຊົນແຂວງ ແລະ ພະແນກການທີ່ກ່ຽວຂ້ອງຂອງແຂວງ ເປັນຕົ້ນ: ພະແນກແຜນການ ແລະ ການລົງທຶນ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກພະລັງງານ ແລະ ບໍ່ແຮ່, ພະແນກກະສິກຳ ແລະ ປ່າໄມ້,

ອ່ານຕໍ່ໜ້າ 4

**ຂໍ່ານັບຊົມເຊີຍວັນສ້າງຕັ້ງກອງທັບປະຊາຊົນລາວ (20/01/1949-20/01/2024) ຄົບຮອບ 75 ປີ ຢ່າງສຸດໃຈ!**

# ກອງປະຊຸມປະຈຳປີ 2023 ຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 13



(ສພຊ) ກອງປະຊຸມຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ໄດ້ເປີດຂຶ້ນໃນວັນທີ 08 ມັງກອນ 2024 ໂດຍການເປັນປະທານຂອງທ່ານ ກິງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງ, ເຂົ້າຮ່ວມມີທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13 ພ້ອມດ້ວຍບັນດາການນຳພັກ-ລັດຂັ້ນແຂວງ, ຄະນະ ສສຊ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ແຂກຖືກເຊີນຈາກບັນດາພະແນກການກ່ຽວຂ້ອງຂອງແຂວງຈຳນວນໜຶ່ງ.

ກອງປະຊຸມ ໄດ້ຮັບຟັງບົດສະຫຼຸບການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13 ປະຈຳປີ 2023 ແລະ ທິດທາງແຜນການວຽກງານປະຈຳປີ 2024 ສະເໜີໂດຍຮອງປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 13, ບົດລາຍງານກ່ຽວກັບການຈັດສັນແລະການຄຸ້ມຄອງ 3 ປະເພດປ່າ ຈາກທ່ານຫົວໜ້າພະແນກກະສິກຳ-ປ່າໄມ້ແຂວງ, ບົດລາຍງານກ່ຽວກັບການຄຸ້ມຄອງ ແລະ ການສົ່ງເສີມການລົງທຶນພາຍໃນແຂວງຈາກທ່ານຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ ແລະ ບົດລາຍງານຈາກຜູ້ຕາງໜ້າສາຂາທະນາຄານພາກກາງກ່ຽວກັບການຄຸ້ມຄອງອັດຕາການແລກປ່ຽນເງິນຕາພາຍໃນແຂວງສະຫວັນນະເຂດ. ຈາກນັ້ນ, ບັນດາທ່ານ ສສຊ ໄດ້ເປັນເຈົ້າການສຸມສະຕິປັນຍາເຂົ້າໃສ່ການຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງສ້າງສັນ ແລະຊັກຖາມບັນດາພະແນກການຢ່າງກົງໄປກົງມາຕໍ່ບັນຫາທີ່ນຳມາປຶກສາຫາລືໃນກອງປະຊຸມຄັ້ງນີ້ ເຊິ່ງເປັນການສະແດງໃຫ້ເຫັນຄວາມຮຽກຮ້ອງຕ້ອງການແລະຄວາມມຸ່ງມາດປາຖະໜາຂອງພໍ່ແມ່ປະຊາຊົນ; ພາກສ່ວນກ່ຽວຂ້ອງກໍໄດ້ຂຶ້ນຊີ້ແຈງທຸກໆບັນຫາທີ່ ສສຊ ຕັ້ງຂຶ້ນດ້ວຍຄວາມສ້າງສັນ ເຮັດໃຫ້ການພິຈາລະນາ-ຮັບຮອງເອົາບັນຫາຕ່າງໆ ບົນຈິດໃຈແຫ່ງຄວາມເປັນເອກະພາບທາງດ້ານທັດສະນະ, ແນວຄິດ, ລະບຽບຫຼັກການ ແລະ ຄວາມຮັບຜິດຊອບສູງຂອງບັນດາທ່ານສະມາຊິກສະພາແຫ່ງຊາດ.

ໃນວັນທີ 09-12 ມັງກອນ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກຍັງໄດ້ສືບຕໍ່ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ6ຂອງສະພາປະຊາຊົນແຂວງສະຫວັນນະເຂດ ຊຸດທີ II ໂດຍການເປັນປະທານຂອງທ່ານ ກິງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງ (ສພຂ), ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ໂດຍມີບັນດາການນຳພັກ-ລັດຂັ້ນແຂວງ, ອະດີດການນຳຂອງແຂວງຂອງເມືອງ, ຄະນະ ສສຊ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ແຂກຖືກເຊີນເຂົ້າຮ່ວມຈຳນວນຫຼາຍ.

ກອງປະຊຸມ ໄດ້ຮັບຟັງການລາຍງານໂດຍສັງເຂບກ່ຽວກັບສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງປະຈຳປີ2023ແລະທິດທາງແຜນການປະຈຳປີ 2024; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024; ບົດປະກອບຄຳເຫັນຂອງຄະນະປະຈຳ ສພຂ ຕໍ່ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄລຍະ 3 ປີຜ່ານມາ (2021-2023); ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໄລຍະ 3 ປີຜ່ານມາ (2021-2023); ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝຂອງແຜນການ5ປີ(2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການເຄື່ອນໄຫວວຽກງານປະຈຳປີ 2023ແລະທິດທາງແຜນການປະຈຳປີ 2024, ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2022; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025, ການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ທິດທາງແຜນ ການປະຈຳປີ 2024, ບົດລາຍງານຜົນການກວດກາຕາມຜົນການກວດສອບປະຈຳປີ 2022; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານປະຈຳປີ 2023 ແລະທິດທາງແຜນການປະຈຳປີ 2024; ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024; ບົດລາຍງານກ່ຽວກັບການປະເມີນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ ຈຳນວນ 04 ສະບັບ (ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງເຂດສະຫງວນທາງຫຼວງໃນແຂວງສະຫວັນນະເຂດ; ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງການບໍລິການ, ຮ້ານອາຫານ, ຮ້ານກິນດື່ມ ແລະ ຮ້ານບັນເທີງ; ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການສົ່ງເສີມ, ຄຸ້ມຄອງວິສາຫະກິດຂະໜາດນ້ອຍ ແລະ ກາງ; ຄຳສັ່ງຂອງທ່ານເຈົ້າແຂວງ ກ່ຽວກັບການເພີ່ມທະວີຄຸ້ມຄອງວຽກງານອາຊີບ-ພາຫະນະພິເສດ); ບົດລາຍງານການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານປະຈຳປີ 2023 ແລະທິດທາງແຜນການປະຈຳປີ 2024 ຂອງສະພາປະຊາຊົນແຂວງ ຊຸດທີ II ແລະ ພິຈາລະນາ, ຮັບຮອງເອົາການສ້າງແລະປັບປຸງນິຕິກຳໃຕ້ກົດໝາຍຈຳນວນ 02 ສະບັບ ຄື: ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການຄຸ້ມຄອງກອງທຶນສັງຄົມສົງເຄາະແຂວງ (ສະບັບປັບປຸງ), ຮ່າງຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການມີສ່ວນຮ່ວມຂອງສັງຄົມຕໍ່ການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາທົ່ວແຂວງ (ສ້າງໃໝ່); ພິຈາລະນາຮັບຮອງເອົາກົງຈັກການຈັດຕັ້ງ ແລະ ການແຕ່ງຕັ້ງບຸກຄະລາກອນຂອງແຂວງ.

ໃນຕອນທ້າຍຂອງກອງປະຊຸມ, ບັນດາສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ພິຈາລະນາຮັບຮອງເອົາບັນດາມະຕິວ່າດ້ວຍແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ, ມະຕິການປະເມີນການຈັດຕັ້ງການປະຕິບັດນິຕິກຳໃຕ້ກົດໝາຍຈຳນວນ 04 ສະບັບ, ມະຕິກ່ຽວກັບການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງປະຈຳປີ2023 ແລະທິດທາງແຜນການປີ2024 ແລະ ມະຕິຈຳນວນໜຶ່ງອີກດ້ວຍ.

**(ນາງ ກຸກກິກ ບຸດດາໄຊ)**

# ຍົກລະດັບຄວາມຮູ້ ວຽກສ້າງ ແລະ ປັບປຸງກົດໝາຍ





(ສພຊ) ເພື່ອຮັບປະກັນການປະຕິບັດໜ້າທີ່ເປັນເສນາທິການທາງດ້ານວຽກງານສ້າງ ແລະ ປັບປຸງກົດໝາຍ ໃຫ້ແກ່ກຳມາທິການກົດໝາຍ ໄດ້ດຳເນີນໄປຢ່າງມີຄຸນນະພາບ, ປະສິດທິພາບ, ປະສິດທິຜົນ ຈຶ່ງມີຄວາມຈຳເປັນຕ້ອງໄດ້ຍົກລະດັບໃຫ້ແກ່ພະນັກງານ-ລັດຖະກອນ ໄດ້ມີຄວາມຮູ້, ຄວາມສາມາດແລະກຳໄດ້ວຽກງານການສ້າງ ແລະປັບປຸງກົດໝາຍ ແລະ ວຽກງານອື່ນທີ່ປິ່ນອ້ອມ. ລະຫວ່າງ 11-12 ມັງກອນ 2024 ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມສຳມະນາຍົກລະດັບຄວາມຮູ້ກ່ຽວກັບວຽກສ້າງ ແລະ ປັບປຸງກົດໝາຍ ໃຫ້ແກ່ພະນັກງານ-ລັດຖະກອນພາຍໃນ ສພຊ ໂດຍການເປັນປະທານຂອງທ່ານ ປອ. ພູທອນ ວໍລະເພັດ ຮອງປະທານກຳມາທິການກົດໝາຍ; ມີບັນດາທ່ານຄະນະກົມ, ຄະນະພະແນກ, ອະດີດຫົວໜ້າກົມກົດໝາຍ, ວິທະຍາກອນຮັບເຊີນຈາກກະຊວງພາຍໃນ ແລະ ພະນັກງານ-ລັດຖະກອນທີ່ຮັບຜິດຊອບວຽກງານສ້າງ ແລະ ປັບປຸງກົດໝາຍຂອງບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ ແລະ ສະຖາບັນຄົ້ນຄວ້ານິຕິກຳ ເຂົ້າຮ່ວມ.

ທ່ານ ປອ. ພູທອນ ວໍລະເພັດ ໄດ້ມີຄຳເຫັນຕໍ່ກອງປະຊຸມວ່າ: ບັນດາຫົວຂໍ້ທີ່ນຳມາສຳມະນາໃນຄັ້ງນີ້ ແມ່ນມີຄວາມຈຳເປັນ, ສຳຄັນ ແລະ ຕິດພັນໂດຍກົງກັບວຽກງານວິຊາສະເພາະ ແລະ ການປະຕິບັດວຽກງານຕົວຈິງ ທີ່ຕິດພັນກັບການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ກົມວິຊາການຂອງກຳມາທິການທີ່ກ່ຽວຂ້ອງທີ່ຮັບຜິດຊອບຕິດຕາມກວດກາບັນດາກະຊວງ, ອົງການ ແລະ ກົມທີ່ເປັນໃຈກາງໃນການປະສານງານລວມ ກໍຄືກົມກົດໝາຍຂອງກຳມາທິການກົດໝາຍ; ໃນໄລຍະຜ່ານມາ ການຄົ້ນຄວ້າ, ກະກຽມດ້ານເນື້ອໃນຕ່າງໆຂອງກົດໝາຍທີ່ຕົນຮັບຜິດຊອບ ແລະ ວຽກງານປິ່ນອ້ອມອື່ນໆ ກ່ຽວກັບການສ້າງ ແລະ ປັບປຸງກົດໝາຍ ຖ້າບັນດາທ່ານເຫັນວ່າມີຈຸດໃດທີ່ຍັງບໍ່ຄ່ອງຕົວ, ຍັງບໍ່ເຂົ້າໃຈໃນຂອດການຈັດຕັ້ງປະຕິບັດ ໃຫ້ສະເໜີແລກປ່ຽນນຳກັນຕື່ມ. ສະນັ້ນ, ເພື່ອຮັບປະກັນໃຫ້ກອງປະຊຸມໄດ້ຮັບຜົນສຳເລັດຕາມຈຸດປະສົງ ແລະຄາດໝາຍ, ຮຽກຮ້ອງມາຍັງບັນດາທ່ານຍົກສູງຄວາມຮັບຜິດຊອບໃນການຮັບຟັງການສະເໜີບົດຮຽນຂອງວິທະຍາກອນ, ຄົ້ນຄວ້າ ແລະ ປະກອບຄຳເຫັນແລກປ່ຽນບົດຮຽນຮ່ວມກັນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານການສ້າງ ແລະ ປັບປຸງກົດໝາຍໃນຕໍ່ໜ້າ ລວມທັງການພົວພັນ, ປະສານງານດ້ານຕ່າງໆໃຫ້ມີຄວາມຄ່ອງຕົວຫຼາຍຂຶ້ນ.

ໃນກອງປະຊຸມ, ບັນດາຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີ 4 ຫົວຂໍ້ຄື: ການເປັນເສນາທິການໃນການລາຍງານ ແລະ ການສະໜອງຂໍ້ມູນກ່ຽວກັບການສ້າງແລະປັບປຸງກົດໝາຍ, ເຕັກນິກຂອງການຄົ້ນຄວ້າຮ່າງກົດໝາຍ ກ່ອນນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ, ຄວາມສຳຄັນຂອງແຜນການສ້າງ ແລະ ປັບປຸງກົດໝາຍ, ເຕັກນິກການຮ່າງເອກະສານທາງລັດຖະການ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ສົນທະນາແລກປ່ຽນຄຳຄິດຄຳເຫັນ ແລະ ໄດ້ຈັດເປັນກຸ່ມ ເພື່ອຄົ້ນຄວ້າ, ວິເຄາະ, ວິໄຈ ຕໍ່ຫົວຂໍ້ຕ່າງໆທີ່ທາງກອງປະຊຸມໄດ້ຍົກຂຶ້ນມາ.

**(ພາບ: ອານຸສອນ ພູມີທອນ, ຂ່າວ: ນາງ ສຸພາວັນ ທອມສະນິດ)**

# ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງ ສພຂ ໄຊຍະບູລີ



(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ຊຸດທີ II ໄດ້ຈັດຂຶ້ນໃນລະຫວ່າງວັນທີ 11-13 ມັງກອນ 2024 ທີ່ຫ້ອງປະຊຸມໃຫຍ່ຂອງແຂວງ, ໂດຍການເປັນປະທານຂອງທ່ານ ເພັງນິລັນ ຄຳພັນເພັງ ປະທານສະພາປະຊາຊົນແຂວງໄຊຍະບູລີ; ມີທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 7, ທ່ານ ພົງສະຫວັນ ສິດທະວົງ ເຈົ້າແຂວງໆໄຊຍະບູລີ ພ້ອມດ້ວຍບັນດາທ່ານຄະນະປະຈຳພັກແຂວງ, ສສຊ ປະຈຳເຂດເລືອກຕັ້ງທີ 7, ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ແຂກຖືກເຊີນເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ໄດ້ສຸມໃສ່ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຂອງແຂວງດັ່ງນີ້: ບົດລາຍງານການເຄື່ອນໄຫວວຽກງານພົ້ນເດັ່ນປະຈຳປີ 2023 ແລະ ທິດທາງແຜນການປີ 2024 ຂອງອົງການປົກຄອງແຂວງ; ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024; ບົດລາຍງານບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2022, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2023 ແລະ ທິດທາງແຜນການປີ 2024; ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄລຍະ 3 ປີ (2021-2023); ບົດລາຍງານການຈັດຕັ້ງປະຕິບັດວຽກງານປະຈຳປີ 2023 ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ 2024 ຂອງອົງການກວດສອບພາກເໜືອ, ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງປະຈຳປີ 2022; ບົດລາຍງານການຈັດຕັ້ງປະຕິບັດວຽກງານປະຈຳປີ 2023 ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ 2024 ຂອງອົງການກວດກາແຫ່ງລັດແຂວງ, ບົດລາຍງານຜົນການກວດກາຕາມຜົນຂອງການກວດສອບປີ 2021; ບົດລາຍງານການຈັດຕັ້ງປະຕິບັດວຽກງານປະຈຳປີ 2023 ແລະ ແຜນການເຄື່ອນໄຫວປະຈຳປີ 2024 ຂອງສານປະຊາຊົນແຂວງ ແລະ ຂອງອົງການໄອຍະການປະຊາຊົນແຂວງ; ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໄລຍະ 3 ປີ ແລະ ທິດທາງແຜນການຮອດປີ 2025; ບົດລາຍງານຂອງສະພາປະຊາຊົນແຂວງ ກ່ຽວກັບການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024.

ນອກນັ້ນ, ກອງປະຊຸມຍັງຈະໄດ້ຮັບຟັງການປະກອບຄຳເຫັນຂອງຕາງໜ້າຄະນະປະຈຳ ສພຂ, ຕາງໜ້າຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 7, ການຊີ້ແຈງເພີ່ມຕື່ມຈາກທ່ານເຈົ້າແຂວງ ແລະ ການຂຶ້ນຊີ້ແຈງຂອງພາກສ່ວນກ່ຽວຂ້ອງ ຈຳນວນໜຶ່ງ ຕໍ່ຄຳຊັກຖາມຂອງບັນດາ ສສຂ.

**(ສອນສັກ ວັນວິໄຊ)**

# ລາວ-ຍີ່ປຸ່ນ ພາຍໃຕ້ການເປັນຄູ່ຮ່ວມຍຸດທະສາດ ໄດ້ຮັບການເສີມຂະຫຍາຍ ແລະ ພັດທະນາຢ່າງຕໍ່ເນື່ອງ




(ສພຊ) ຕອນບ່າຍວັນທີ 11 ມັງກອນ 2024 ທີ່ສະພາແຫ່ງຊາດ, ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ, ປະທານຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ ໄດ້ພົບປະສອງຝ່າຍກັບທ່ານ ນາງ ຊຶຈິຍະ ຊິນາໂກະ ລັດຖະມົນຕີກະຊວງການຟື້ນຟູ, ປະທານຄະນະມິດຕະພາບລັດຖະສະພາຍີ່ປຸ່ນ-ລາວ, ສະ ມາຊິກສະພາຜູ້ແທນລາຊະດອນ ໃນໂອກາດທີ່ນຳພາຄະນະມາຢ້ຽມຢາມ ສປປລາວຢ່າງເປັນທາງການ.

ການພົບປະຄັ້ງນີ້ ເປັນການປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມຂອງສອງປະເທດລາວ ແລະ ຍີ່ປຸ່ນ ພາຍໃຕ້ການເປັນຄູ່ຮ່ວມຍຸດທະສາດໄດ້ຮັບການເສີມຂະຫຍາຍແລະພັດທະນາຢ່າງຕໍ່ເນື່ອງ ເວົ້າລວມ, ເວົ້າສະເພາະ ລະຫວ່າງສອງອົງການນິຕິບັນຍັດ, ສອງຄະນະມິດຕະພາບລັດຖະສະພາ ໃຫ້ນັບມື້ແຕກດອກອອກຜົນຢ່າງບໍ່ຢຸດຢັ້ງ ແລະ ແໜ້ນແຟ້ນຍິ່ງຂຶ້ນ. ທັງສອງຝ່າຍໄດ້ແຈ້ງໃຫ້ຮູ້ ກ່ຽວກັບສະພາບການທີ່ພົ້ນເດັ່ນໃນການພັດທະນາເສດຖະກິດ-ສັງຄົມຂອງຕົນໃຫ້ກັນ ແລະກັນຊາບໂດຍສັງເຂບ; ພິເສດແມ່ນຕໍ່ບັນດາຜົນສຳເລັດອັນໃຫຍ່ຫຼວງຮອບດ້ານຂອງລັດຖະບານ, ລັດຖະສະພາ ແລະ ປະຊາຊົນຍີ່ປຸ່ນ ຍາດມາໄດ້ຕະຫຼອດໄລຍະຜ່ານມາ ເຊິ່ງເຫັນວ່າຍີ່ປຸ່ນ ເປັນປະເທດພັດທະນາ, ມີອຸດສາຫະກຳທັນສະໄໝ, ເສດຖະກິດເຂັ້ມແຂງ ແລະ ຂະຫຍາຍຕົວສູງຂອງໂລກ. ພ້ອມນີ້, ຍີ່ປຸ່ນຍັງໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການປົກປັກຮັກສາສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາແບບຍືນຍົງ ໃນພາກພື້ນ ແລະ ສາກົນ ໂດຍສະເພາະແມ່ນ ການພົວພັນຮ່ວມມື

ອ່ານຕໍ່ໜ້າ 4

## ວາງພວງມາລາ...

(ຕໍ່ຈາກໜ້າ 1)

ກຳມະການພັກແຂວງ, ຄະນະກອງບັນຊາການທະຫານແຂວງ, ບັນດາສະຫາຍເລຂາພັກເມືອງ, ຫົວໜ້າຫ້ອງການຕ່າງໆອ້ອມຂ້າງເມືອງ, ແຂກຖືກເຊີນ ແລະ ຄະນະຕິດຕາມເຂົ້າຮ່ວມ.

ທ່ານ ເພັງນິລັນ ຄຳພັນເພັງ ໄດ້ເລົ່າເຫດການຄວາມເປັນມາ ລະນຶກບັ້ນຮົບ 3 ບ້ານ ຂອງເມືອງທົ່ງມີໄຊ ຄົບຮອບ 40 ປີ ໂດຍຫຍໍ້ ແລະ ທ່ານ ພັທ. ນຸດ ນິລະນິນ ອະດີດຫົວໜ້າກອງບັນຊາການທະຫານເມືອງປາກລາຍ, ຜູ້ຢູ່ໃນເຫດການ ແລະ ສູ້ຮົບຕົວຈິງໃນການເຮັດໜ້າທີ່ຮອງຫົວໜ້າກອງຮ້ອຍສູ້ຮົບໃນຕອນນັ້ນ ເຊິ່ງທ່ານໄດ້ເລົ່າເຫດການຕົວຈິງບາງຕອນໃນປີ 1984 ແລະ ການໂຈມຕີຕ້ານ, ຍຶດຄືນເອົາຄ້າຍກົມກອງຂອງສັດຕູ ແລະ ການສະກັດລັດຕີທະຫານ ປະຕິການ ຈົນຮອດມື້ທີ່ໄດ້ຍົກຍ້າຍໄປຮັບໜ້າທີ່ໃໝ່.

ໃນຕອນເຊົ້າຂອງວັນທີ 10 ມັງກອນ, ການນຳພັກ-ລັດ ເຊິ່ງນຳໂດຍທ່ານ ພົງສະຫວັນ ສິດທະວົງ ເຈົ້າແຂວງໆໄຊຍະບູລີ ໄດ້ນຳພາການນຳພັກ-ລັດ, ບັນດາທ່ານເຈົ້າເມືອງຕ່າງໆພາຍໃນແຂວງ, ພະນັກງານຫຼັກແຫຼ່ງຂອງເມືອງ ແລະ ຊາວພໍ່ແມ່ປະຊາຊົນ ຊາວພຸດທະບໍລິສັດຊາວເມືອງທົ່ງມີໄຊໃສ່ບາດຖວາຍສັງຄະທານ, ຖວາຍກອງອັດຖະ ເພື່ອອຸທິດ ບຸນກຸສົນໃຫ້ແກ່ບັນດາສະຫາຍນັກຮົບຜູ້ທີ່ເສຍສະຫຼະໃນບັ້ນຮົບ 3 ບ້ານ ຂອງເມືອງທົ່ງມີໄຊໃນຄັ້ງນັ້ນ.

ວັນທີ 14 ມັງກອນ, ທ່ານ ພົທ. ສຸວອນ ເລືອງບຸນມີ ຮ່ວມກັບທ່ານ ເພັງນິລັນ ຄຳພັນເພັງ ແລະ ທ່ານ ເສີດ ແສງສຸລິນ ເຈົ້າເມືອງໆພຽງ ພ້ອມດ້ວຍຄະນະຕິດຕາມ ແລະ ຕຳຫຼວດກຸ່ມ, ປ້ອງກັນຄວາມສະຫງົບບ້ານໂພນທອງ ໄດ້ລົງຢ້ຽມຢາມພົບປະເຜົ່າກຣີ (ຕອງເຫຼືອງ) ທີ່ອາໄສຢູ່ປ່າສະຫງວນແຫ່ງຊາດນ້ຳປຸຍຂອບເຂດບ້ານໂພນທອງ ເມືອງພຽງ; ໂອກາດດັ່ງກ່າວ, ທ່ານຮອງປະທານສະພາແຫ່ງຊາດໄດ້ມອບເຄື່ອງບໍລິໂພກຈຳນວນໜຶ່ງໃຫ້ແກ່ເຜົ່າຕອງເຫຼືອງ ໂດຍມີທ້າວ ຈັນ ຫົວໜ້າເຜົ່ານຳພາລູກຫຼານຮັບເອົາເຄື່ອງຊ່ວຍເຫຼືອດັ່ງກ່າວ.

ຕາມການລາຍງານຂອງທ່ານເຈົ້າເມືອງໆພຽງໃຫ້ຮູ້ວ່າ: ເຜົ່າກຣີ ແມ່ນເຜົ່າໜຶ່ງທີ່ດຳລົງຊີວິດຢູ່ໃນເມືອງພຽງມາເປັນເວລາຫຼາຍປີ ໂດຍສະເພາະອາໄສຢູ່ເຂດປ່າສະຫງວນແຫ່ງຊາດນ້ຳປຸຍເປັນສ່ວນໃຫຍ່, ປົກກະຕິແລ້ວ ພວກເຂົາຈະບໍ່ອາໄສຢູ່ບ່ອນໃດບ່ອນໜຶ່ງແບບຖາວອນ ຈະມີການເຄື່ອນຍ້າຍໄປຕາມປ່າຕາມດົງບ່ອນອຸດົມສົມບູນ ແລະ ຢູ່ແບບກະແຈກກະຈາຍບ່ອນລະຄອບຄົວສອງຄອບຄົວ, ການອົບພະຍົບເຄື່ອນຍ້າຍມີລັກສະນະໝູນວຽນຄືນມາບ່ອນເກົ່າ; ດ້ວຍເຫດນີ້ ພວກເຂົາຈຶ່ງສາມາດຮູ້ແຫຼ່ງທີ່ມາຂອງອາຫານການກິນ ແລະ ຂອບເຂດການລ່າສັດປ່າໄດ້ເປັນຢ່າງດີ. ການປຸກສ້າງ ແລະ ບ່ອນຢູ່ອາໄສຈະບໍ່ຖາວອນ ພຽງແຕ່ເອົາໄມ້ເຮ້ຍມາເກາະກ່າຍກັນ ຈາກນັ້ນຈະຫາຕອງກ້ວຍ, ໃບບຸ່ນ, ໃບຄໍ້ມາ ມຸງເທົ່ານັ້ນ, ເມື່ອອາຫານເລີ່ມຫາຍາກ ຕອງກ້ວຍກໍເຫຼືອງ ເຂົາເຈົ້າກໍຈະຍ້າຍໄປຫາກິນບ່ອນໃໝ່; ເຜົ່າຕອງເຫຼືອງຈະບໍ່ມີການທຳການຜະລິດເປັນຕົ້ນ ເປັນໂຕ ສ່ວນຫຼາຍອາໄສຫາກິນຕາມທຳມະຊາດເປັນສ່ວນໃຫຍ່, ບໍ່ກິນເຂົ້າປາອາຫານ ເປັນຕົ້ນຕໍ. ການດຳລົງຊີວິດແຕ່ລະວັນ ຈະອອກຈາກບ່ອນຢູ່ເພື່ອໄປຊອກອາຫານ ເປັນຕົ້ນ: ໜໍ່ໄມ້, ຫົວມັນປ່າ, ຍອດບຸ່ນ, ຍອດຫວາຍ, ໝາກຄໍ້, ໝາກຕາວ, ປູປາຕາມຮ່ອງຫ້ວຍທຳມະຊາດ ແລະ ໃສ່ແຮ້ວເອົາສັດປ່າມາສູ່ກັນກິນ ບາງຄັ້ງໂຊກດີຫາມາໄດ້ຫຼາຍ ກໍນຳເອົາມາແລກເຄື່ອງມືຫາກິນນຳປະຊາຊົນຢູ່ເຂດບ້ານໃກ້ຄຽງເຊັ່ນ: ມີດ, ຜ້າ, ສຽມ ແລະ ອື່ນໆ. ປັດຈຸບັນ, ພວກເຂົາເຈົ້າຮູ້ນຳໃຊ້ວັດຖຸທຳມະຊາດດັດແປງມາຮັບໃຊ້ຊີວິດປະຈຳວັນຫຼາຍຂຶ້ນ ເຊັ່ນ: ການເອົາຕົວໄມ້ມາສານເປັນສາດ, ຕັດບັ້ງໄມ້ມາຕົ້ມນ້ຳ, ນຳບັ້ງໄມ້ມາປະດິດເປັນເຄື່ອງດົນຕີ ແລະ ອື່ນໆ ແຕ່ຍັງເປັນການປະດິດຂັ້ນຕໍ່າ; ນອກນັ້ນຍັງມີຄວາມເບີກບານທາງດ້ານອາລົມຈິດເຊັ່ນ: ການຮ້ອງລຳທຳເພງ ບາງຄັ້ງກໍອອກເປັນພາສາລາວ ແລະ ພາສາມາບຣີ ແລະ ຮູ້ຈັກນຸ່ງໂສ້ງ, ນຸ່ງເສື້ອ, ຮູ້ກິນອາຫານທີ່ເຮົາແຕ່ງໃຫ້ກິນ ຖ້າບໍ່ມີຜູ້ໃຫ້ກິນ ພວກເຂົາເຈົ້າກໍຫາກິນຕາມທຳມະຊາດ, ອາດເວົ້າໄດ້ວ່າເຂົາເຈົ້າຍັງບໍ່ຮູ້ທຳການຜະລິດກະສິກຳ ໃນການດັດແປງທຳມະຊາດມາຮັບໃຊ້ຊີວິດການເປັນຢູ່ເທື່ອ. ເຂົາເຈົ້າມີພາສາປາກເວົ້າເປັນຂອງຕົນເອງ ເອີ້ນວ່າພາສາມາບຣີ ຈັດຢູ່ໃນໝວດພາສາມອນຂະແມ ແລະ ມີການຢຳເກງຕໍ່ປາກົດການທາງທຳມະຊາດທີ່ເກີດຂຶ້ນ; ປັດຈຸບັນ, ເຜົ່າກຣີມີທັງໝົດ 20 ຄົນ ຍິງ 10 ຄົນ, ເດັກນ້ອຍເກນອາຍຸເຂົ້າຮຽນ 4 ຄົນ, ເດັກນ້ອຍອາຍຸ 4 ເດືອນປາຍມີ 1 ຄົນ; ຈາກນັ້ນ, ທ່ານເຈົ້າເມືອງໄດ້ສະເໜີຕໍ່ຄະນະທ່ານຮອງປະທານສະພາແຫ່ງຊາດວ່າ: ສະເໜີໃຫ້ອົງການຈັດຕັ້ງຂັ້ນສູນກາງ, ຂັ້ນແຂວງ ມີແຜນງານໂຄງການພັດທະນາແບບມີຈຸດສຸມເພື່ອຄຸ້ມຄອງ ແລະ ຮັກສາວັດທະນະທຳວິຖີຊີວິດແບບດັ້ງເດີມຂອງເຜົ່າດັ່ງກ່າວໃຫ້ມີຄວາມຍືນຍົງ ໂດຍປາສະຈາກບຸກຄົນເຂົ້າແຊກແຊງເພື່ອຫາຜົນປະໂຫຍດໃສ່ຕົນເອງ ແລະ ຂໍສະເໜີໃຫ້ເຜົ່າກຣີ ເປັນເຜົ່າທີ 9 ຂອງເມືອງພຽງ ແຂວງໄຊຍະບູລີ.

**(ສອນສັກ ວັນວິໄຊ)**

## ທ່ານ ສົມມາດ...

(ຕໍ່ຈາກໜ້າ 1)

ທິການ ສພຂ ແລະ ຄະນະອຳນວຍການໂຮງຮຽນດັ່ງກ່າວເຂົ້າຮ່ວມ; ພ້ອມກັນນັ້ນ, ທ່ານ ນາງ ຫົງຄຳ ຊາພັກດີ ໄດ້ສະແດງຄວາມຂອບໃຈມາຍັງທ່ານຮອງປະທານສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ທີ່ໄດ້ໃຫ້ການຊ່ວຍເຫຼືອຊຸກຍູ້ດ້ານອຸປະກອນໄຟຟ້າໃຫ້ແກ່ໂຮງຮຽນໃນຄັ້ງນີ້ ແລະ ຈະນຳໃຊ້ວັດຖຸອຸປະກອນດັ່ງກ່າວໃຫ້ເກີດປະໂຫຍດສູງສຸດ.

**(ວິມັດ ສີສຸລາດ)**

## ຮອງປະທານ...

(ຕໍ່ຈາກໜ້າ 1)

ແລະ ຊັບສິນຢ່າງຫຼວງຫຼາຍ ແລະ ສະແດງຄວາມເຊື່ອໝັ້ນວ່າ ພາຍໃຕ້ການນຳພາຂອງລັດຖະບານຍີ່ປຸ່ນ, ປະຊາຊົນຍີ່ປຸ່ນຈະສາມາດຜ່ານຜ່າຄວາມຫຍຸ້ງຍາກໃນຄັ້ງນີ້ ແລະ ຟື້ນຟູຊີວິດການເປັນຢູ່ໃຫ້ກັບຄືນສູ່ສະພາບປົກກະຕິໂດຍໄວ.

ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງ ສປປ ລາວ ແລະ ຍີ່ປຸ່ນ ເວົ້າສະເພາະລະຫວ່າງສອງອົງການນິຕິບັນຍັດ ແລະ ຊົມເຊີຍຜົນການພົບປະລະຫວ່າງສອງຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ, ຍີ່ປຸ່ນ-ລາວ ໃນຄັ້ງນີ້. ເວົ້າລວມ, ການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດ ລາວ-ຍີ່ປຸ່ນ ໃນໄລຍະຜ່ານມາ ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ, ມີການແລກປ່ຽນຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆນຳກັນເປັນປົກກະຕິ; ພ້ອມນັ້ນ ທ່ານຍັງໄດ້ແຈ້ງສະພາບການກ່ຽວກັບ ສປປ ລາວ, ການເຄື່ອນໄຫວຂອງສະພາແຫ່ງຊາດລາວ ແລະ ແຈ້ງໃຫ້ຮັບຊາບໃນປີ 2024 ສປປ ລາວ ຈະເປັນປະທານອາຊຽນ, ສະພາແຫ່ງຊາດລາວ ກໍຈະເປັນປະທານໄອປາ ແລະ ຂໍສະແດງຄວາມຂອບໃຈມາຍັງລັດຖະບານຍີ່ປຸ່ນ ທີ່ຈະສືບຕໍ່ໃຫ້ການສະໜັບໜູນ ສປປ ລາວ ໃນການເປັນປະທານອາຊຽນໃນຄັ້ງນີ້. ນອກນັ້ນ ທັງສອງຝ່າຍຍັງໄດ້ຕົກລົງເປັນເອກະພາບນຳກັນວ່າ ໃນໂອກາດສະເຫຼີມສະຫຼອງ 70 ປີ ວັນສ້າງຕັ້ງສາຍພົວພັນການທູດລະຫວ່າງສອງປະເທດໃນປີ 2025 ທີ່ຈະມາເຖິງ, ສອງຝ່າຍຈະມີກິດຈະກຳຮ່ວມກັນເພື່ອເສີມສ້າງມິດຕະພາບທີ່ເປັນມູນເຊື້ອລະຫວ່າງປະຊາຊົນສອງຊາດ. ທ່ານຮອງປະທານສະພາແຫ່ງຊາດ ໄດ້ຝາກຄວາມຢື້ຢາມຖາມຂ່າວຈາກທ່ານປະທານສະພາແຫ່ງຊາດລາວ ໄປຍັງປະທານສະພາຜູ້ແທນລາຊະດອນຂອງຍີ່ປຸ່ນ ແລະ ອວຍພອນໄຊໃຫ້ທ່ານ ນາງ ຊືຈິຢະ ຊິນະໂກະ ພ້ອມດ້ວຍຄະນະ ຈົ່ງປະສົບຜົນສຳເລັດໃນການຢ້ຽມຢາມ ສປປ ລາວ ຄັ້ງນີ້ ແລະ ເດີນທາງກັບຄືນປະເທດດ້ວຍຄວາມສະຫວັດດີພາບ.

ຈາກນັ້ນ, ທ່ານ ນາງ ຊືຈິຢະ ຊິນະໂກະ ກໍໄດ້ກ່າວສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ, ພ້ອມແຈ້ງໃຫ້ຊາບໃນການມາເຄື່ອນໄຫວເຮັດວຽກຢູ່ ສປປ ລາວ ໃນເທື່ອນີ້ ແລະ ຜົນສຳເລັດໃນການພົບປະເຮັດວຽກກັບຄະນະມິດຕະພາບລັດຖະສະພາ ຍີ່ປຸ່ນ-ລາວ, ລາວ-ຍີ່ປຸ່ນ ພ້ອມໃຫ້ຄຳໝັ້ນວ່າ: ຈະສືບຕໍ່ຊຸກຍູ້ສົ່ງເສີມໃຫ້ການຊ່ວຍເຫຼືອ ສປປລາວ ໃນການເປັນປະທານອາຊຽນ ແລະ ປະທານໄອປາ ກໍຄືການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ. ອວຍພອນໃຫ້ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມທີ່ມີມາແຕ່ດົນນານ ລະຫວ່າງ ຍີ່ປຸ່ນ ແລະ ສປປ ລາວ; ແລະ ການເປັນຄູ່ຮ່ວມຍຸດທະສາດຂອງສອງປະເທດ ຈົ່ງສືບຕໍ່ຂະຫຍາຍຕົວ ແລະ ແຕກດອກອອກຜົນຍິ່ງໆຂຶ້ນໄປ.

**(ກິງທະນູຄຳ ພິພັດເສລີ)**

## ກສຕສ...

(ຕໍ່ຈາກໜ້າ 1)

ພະແນກອຸດສາຫະກຳ ແລະ ການຄ້າ, ພະແນກການເງິນ ເພື່ອຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານໂຄງການທົດລອງຂຸດຄົ້ນແຮ່ທາດ ຕາມຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການອະນຸຍາດການຂຸດຄົ້ນແຮ່ທາດແບບທົດລອງ ສະບັບເລກທີ 61/ນຍ, ລົງວັນທີ 21/6/2021 ແລະ ການຈັດຕັ້ງປະຕິບັດບັນດາມະຕິຂອງສະພາແຫ່ງຊາດ ເຊິ່ງກອງປະຊຸມໄດ້ຮັບຟັງການລາຍງານຈາກພະແນກການທີ່ກ່ຽວຂ້ອງ ແລະ ໄດ້ມີການແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍ ແລະ ດ້ານອ່ອນຂໍ້ຄົງຄ້າງທີ່ຕ້ອງໄດ້ຊອກຫາວິທີແກ້ໄຂ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ.

ຜ່ານການຮັບຟັງການລາຍງານ, ທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ໃນນາມປະທານຮ່ວມກອງປະຊຸມ ໄດ້ມີຄຳເຫັນຊີ້ນຳໃຫ້ພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ຈັດຕັ້ງປະຕິບັດວຽກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເປັນຕົ້ນ: ຂົງເຂດວຽກງານແຮ່ທາດ: ຮີບຮ້ອນປະເມີນຜົນການຈັດຕັ້ງປະຕິບັດໂຄງການທົດລອງຂຸດຄົ້ນແຮ່ທາດທີ່ກຳລັງຈັດຕັ້ງປະຕິບັດຢູ່ພາຍໃນແຂວງໃຫ້ມີປະສິດທິພາບ, ປະສິດທິຜົນ ພ້ອມທັງມີມາດຕະການຢ່າງເຂັ້ມງວດຕໍ່ໂຄງການທີ່ບໍ່ມີປະສິດທິຜົນ ຄວນໂຈະ ແລະ ໂຄງການໃດທີ່ມີປະສິດທິຜົນ ສືບຕໍ່ຈັດຕັ້ງປະຕິບັດໃຫ້ສຳເລັດ ໂດຍຫັນເຂົ້າສູ່ການດຳເນີນໂຄງການແບບປົກກະຕິ; ການຄົ້ນຄວ້າອະນຸມັດໂຄງການຂຸດຄົ້ນແຮ່ທາດໃນຕໍ່ໜ້າ ຕ້ອງໃຫ້ສອດຄ່ອງກັບຍຸດທະສາດການພັດທະນາແຮ່ທາດ ທີ່ສະພາແຫ່ງຊາດໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX. ຂົງເຂດວຽກງານອຸດສາຫະກຳ ແລະ ການຄ້າ: ໃຫ້ສືບຕໍ່ຊຸກຍູ້ສົ່ງເສີມການຜະລິດປຸງແຕ່ງສິນຄ້າເພື່ອສົ່ງອອກຜະລິດຕະພັນສຳເລັດຮູບຕ່າງໆ ໃຫ້ມີຄວາມຄ່ອງຕົວ; ໃຫ້ພາກສ່ວນກ່ຽວຂ້ອງ ຮີບຮ້ອນປະເມີນການຈັດຕັ້ງປະຕິບັດໂຄງການປຸງແຕ່ງນ້ຳມັນຂອງ ບໍລິສັດ ຍອດງື່ມ ພາວເວີ ຈຳກັດ ເພື່ອເປັນຂໍ້ມູນລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 238/ຄປຈ, ລົງວັນທີ 03 ກັນຍາ 2023. ຂົງເຂດວຽກງານກະສິກຳ ແລະ ປ່າໄມ້: ເອົາໃຈໃສ່ ຄົ້ນຄວ້າ, ປັບປຸງນະໂຍບາຍ ແລະ ນິຕິກຳ ກ່ຽວກັບການສົ່ງເສີມວຽກງານການຟື້ນຟູ ແລະ ປູກໄມ້ ໂດຍການມີສ່ວນຮ່ວມ ລະຫວ່າງພາກລັດ, ຜູ້ປະກອບການ ແລະ ປະຊາຊົນ ໃຫ້ມີຄວາມຊັດເຈນ ແລະ ຮັດກຸມ ພ້ອມທັງສ້າງແຜນຟື້ນຟູປ່າ, ປູກໄມ້ທົດແທນ ແລະ ປົກປັກຮັກສາໃນແຕ່ລະຂົງເຂດ ເພື່ອໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ໃຫ້ມີເນື້ອທີ່ປ່າປົກຫຸ້ມ 70%; ສຸມໃສ່ຕິດຕາມ, ກວດກາ ແລະ ສັງລວມ ການປະຕິບັດພັນທະຕ່າງໆ ກ່ຽວກັບວຽກງານຟື້ນຟູປ່າໄມ້ ແລະ ປູກໄມ້ທົດແທນ ຕາມສັນຍາສຳປະທານ, ກົດໝາຍ, ມະຕິສະພາແຫ່ງຊາດ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງຂອງບັນດາໂຄງການກໍ່ສ້າງເຂື່ອນໄຟຟ້າ, ບໍ່ແຮ່, ໂຄງລ່າງພື້ນຖານ ທີ່ໄດ້ຮັບອະນຸຍາດຈາກລັດຖະບານໃນໄລຍະຜ່ານມາ. ຂົງເຂດວຽກງານຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ: ໃຫ້ສືບຕໍ່ເອົາໃຈໃສ່ສຳຫຼວດ, ວັດແທກ, ຂຶ້ນທະບຽນອອກໃບຕາດິນ ໃຫ້ສາມາດບັນລຸຕາມແຜນການທີ່ວາງໄວ້ພ້ອມທັງສືບຕໍ່ຜັນຂະຫຍາຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂອງແຂວງ ໂດຍຕິດພັນກັບການຊຸກຍູ້ຢ່າງແຂງແຮງໃນການຈັດຕັ້ງຜັນຂະຫຍາຍກົດໝາຍວ່າດ້ວຍທີ່ດິນ ເຂົ້າໃນຊີວິດຕົວຈິງໃຫ້ທົ່ວເຖິງ ແລະ ມີຜົນສັກສິດ; ສືບຕໍ່ຕິດຕາມຢ່າງໃກ້ຊິດບັນຫາຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ອາດຈະເກີດຂຶ້ນຈາກໂຄງການພັດທະນາຕ່າງໆ ເປັນຕົ້ນໂຄງການພັດທະນາໄຟຟ້າ, ໂຄງການຂຸດຄົ້ນແຮ່ທາດ, ໂຄງການພັດທະນາພື້ນຖານໂຄງລ່າງອື່ນໆ.

ຫຼັງຈາກນັ້ນ, ຄະນະຍັງໄດ້ເດີນທາງໄປເຂດພື້ນທີ່ຕົວຈິງບາງໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳ ຢູ່ເມືອງຄຳ, ໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ຫາຍາກ ຢູ່ເຂດບ້ານສອນມອນ, ໜອງໂອນ ແລະ ຍອດລ້ຽງ ແລະ ໄດ້ລົງຢ້ຽມຢາມໂຮງງານປະສົມນ້ຳມັນຂອງບໍລິສັດ ຍອດງື່ມ ພາວເວີ ຈຳກັດ.

ໃນໄລຍະຄະນະລົງເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ວຽກງານຢູ່ແຂວງຊຽງຂວາງໃນຄັ້ງນີ້, ທ່ານປະທານ ກສຕສ ໃນນາມຫົວໜ້າຄະນະ ໄດ້ມອບຄອມພິວເຕີທີ່ໄດ້ຮັບການຊ່ວຍເຫຼືອຈາກຄະນະກອງທຶນຊ່ວຍເຫຼືອສັງຄົມ ຂອງສະພາແຫ່ງຊາດ ໃຫ້ແກ່ສະພາປະຊາຊົນແຂວງຊຽງຂວາງ ຈຳນວນ 1 ຊຸດ ເພື່ອປະກອບສ່ວນເຂົ້າໃນວຽກງານໃຫ້ມີຄວາມສະດວກຂຶ້ນຕື່ມ.



ໃນວັນທີ 04 ມັງກອນ ຜ່ານມາ, ທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ພ້ອມດ້ວຍຄະນະປະກອບມີທ່ານຮອງປະທານ ກສຕສ, ທ່ານຮອງປະທານກຳມາທິການ ປກສ-ປກຊ ແລະ ບັນດາກົມ, ບັນດາພະແນກການຂອງນະຄອນຫຼວງວຽງຈັນ ທີ່ກ່ຽວຂ້ອງ, ໄດ້ລົງເຄື່ອນໄຫວຕິດຕາມການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນ ຕາມແລວແມ່ນ້ຳທີ່ເປັນຊາຍແດນລະຫວ່າງຊາດ ເຂດເມືອງສັງທອງ, ນະຄອນຫຼວງວຽງຈັນ.

ໃນໂອກາດນີ້, ທ່ານ ສັງວອນ ພົມມະສອນ, ຮອງເຈົ້າເມືອງ ເມືອງສັງທອງ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງສັງທອງ; ພ້ອມດຽວກັນນັ້ນ, ທ່ານ ພອນໄຊ ສຸລິຍະວົງ ຕາງໜ້າໃຫ້ແກ່ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ໄດ້ລາຍງານກ່ຽວກັບສະພາບການເຊາະເຈື່ອນຂອງຕາຝັ່ງແມ່ນ້ຳຂອງ ແລະ ການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນຂອບເຂດເມືອງສັງທອງ ໃຫ້ຮູ້ວ່າ: ນະຄອນຫຼວງວຽງຈັນ ມີຂອບເຂດຊາຍແດນທີ່ຕິດກັບແມ່ນ້ຳຂອງນັບຕັ້ງແຕ່ປາກຫ້ວຍຈັນເມືອງສັງທອງ ຫາປາກຫ້ວຍສະພາຍ ເມືອງປາກງື່ມ ມີຄວາມຍາວທາງນ້ຳທັງໝົດ 182 ກິໂລແມັດ (ກມ), ການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນມາຮອດປັດຈຸບັນສຳເລັດ 73,9 ກມ ເທົ່າກັບ 40,6% (ໃນ 73,9 ກມ ແຍກເປັນສອງແບບການກໍ່ສ້າງຄື: ກໍ່ສ້າງແບບລຽນຫີນຕາມສະຫຼິບ RipRap 51,355 ກມ, ກໍ່ສ້າງແບບຄັນຄູຫີນ Groy ຈຳນວນ 280 ຄັນຄູ ເທົ່າກັບ 22,545 ກມ) ຍັງບໍ່ທັນໄດ້ກໍ່ສ້າງ 108 ກມ. ສຳລັບຂອບເຂດເມືອງສັງທອງແມ່ນມີແມ່ນ້ຳຂອງໄຫຼຜ່ານປະມານ 49 ກມ ນັບຕັ້ງແຕ່ປາກຫ້ວຍຈັນ ຫາບ້ານອ່າງໃຫຍ່; ການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນໃນໄລຍະຜ່ານມາຮອດປັດຈຸບັນແມ່ນສາມາດຈັດຕັ້ງປະຕິບັດໄດ້ 11,64 ກມ ໃນນີ້ ກໍ່ສ້າງແບບລຽນຫີນສະຫຼັບ 5,71 ກມ, ກໍ່ສ້າງແບບຄັນຄູຫີນ ຈຳນວນ 75 ຄັນຄູ ເທົ່າກັບ 5,93 ກມ, ຍັງບໍ່ທັນໄດ້ຮັບການກໍ່ສ້າງ 37,36 ກມ; ເຂດເມືອງສັງທອງແມ່ນມີເກາະດອນຂະໜາດນ້ອຍຈຳນວນຫຼາຍ ແລະ ມີດອນຂະໜາດໃຫຍ່ 1 ດອນ ຄືດອນກາງຂອງ, ມີລວງຍາວອ້ອມຮອບດອນ 12 ກມ ເນື້ອທີ່ປະມານ 467 ເຮັກຕາ.

ຈາກນັ້ນ, ທ່ານປະທານກຳມາທິການ ໄດ້ມີການແນະນຳ ແລະ ແລກປ່ຽນບາງບັນຫາທີ່ຕິດພັນກັບການພັດທະນາໂດຍສະເພາະບັນຫາທີ່ຕິດພັນກັບການປ້ອງກັນຕາຝັ່ງເຈື່ອນ, ການຂຸດຄົ້ນແຮ່ທາດພາຍໃນເມືອງ ເຊິ່ງຈະຕ້ອງໄດ້ມີການຄຸ້ມຄອງຢ່າງມີຈຸດສຸມ ແລະ ຕາມລະບຽບກົດໝາຍ; ຫຼັງຈາກນັ້ນ, ຄະນະໄດ້ເດີນທາງໄປມອບເຄື່ອງຕອງນ້ຳສະອາດທີ່ໄດ້ຕິດຕັ້ງສຳເລັດແລ້ວ ເຊິ່ງໄດ້ຮັບການຊ່ວຍເຫຼືອຈາກບໍລິສັດທີ່ປຶກສາດາຊານ ສ.ເກົາຫຼີ ໃຫ້ແກ່ບ້ານນາຫອຍປັງ, ເມືອງສັງທອງ ນະຄອນຫຼວງວຽງຈັນ.

**(ກສຕສ ແລະ ນາງ ກຸກກິກ ບຸດດາໄຊ)**

## ລາວ-ຍີ່ປຸ່ນ...

(ຕໍ່ຈາກໜ້າ 3)

ກັບອາຊຽນ ອັນໄດ້ເຮັດໃຫ້ຖານະບົດບາດຂອງຍີ່ປຸ່ນນັບມື້ນັບພົ້ນເດັ່ນຂຶ້ນຢ່າງບໍ່ຢຸດຢັ້ງ ທັງຢູ່ໃນອາຊຽນ ກໍຄືຢູ່ໃນບັນດາພາກພື້ນ ແລະ ໃນໂລກ. ພ້ອມກັນນັ້ນ, ທ່ານ ນາງ ທຸມມາລີ ວົງພະຈັນ ສະແດງຄວາມຂອບໃຈເປັນຢ່າງສູງມາຍັງລັດຖະສະພາ, ລັດຖະບານ ແລະ ປະຊາຊົນຍີ່ປຸ່ນ ທີ່ໄດ້ສະໜັບສະໜູນຊ່ວຍເຫຼືອ ສປປ ລາວ ໃນການພັດທະນາຕະຫຼອດໄລຍະທີ່ຜ່ານມາ ເປັນຕົ້ນ ການຜັນຂະຫຍາຍແຜນປະຕິບັດງານ ລາວ-ຍີ່ປຸ່ນ (Action Plan), ບັນດາໂຄງການທີ່ສຳຄັນໃນຂົງເຂດການພັດທະນາຊັບພະຍາກອນມະນຸດ, ໂຄງລ່າງພື້ນຖານ, ດ້ານສາທາລະນະສຸກ, ກະສິກຳ-ປ່າໄມ້, ເກັບກູ້ລະເບີດບໍ່ທັນແຕກ, ໂຄງການປັບປຸງສະໜາມກິລາເຈົ້າອານຸວົງ, ການສະໜັບສະໜູນ ສປປ ລາວ ໃນການເປັນປະທານອາຊຽນໃນປີ 2024 ສຳລັບສະພາແຫ່ງຊາດ ກໍຈະເປັນປະທານກອງປະຊຸມ AIPA ຄັ້ງທີ 45 ພາຍໃຕ້ຫົວຂໍ້ "ບົດບາດຂອງລັດຖະສະພາໃນການເພີ່ມທະວີການເຊື່ອມຈອດ ແລະ ການເຕີບໂຕ ແບບກວມລວມຂອງອາຊຽນ".

ໃນນາມຄະນະມິດຕະພາບລັດຖະສະພາລາວ-ຍີ່ປຸ່ນ, ທ່ານປະທານກຳມາທິການວັດທະນະທຳ-ສັງຄົມ ໄດ້ສະເໜີຄະນະມິດຕະພາບລັດຖະສະພາ ຍີ່ປຸ່ນ-ລາວ ພິຈາລະນາຍົກລະດັບການຮ່ວມມື ໂດຍອາດໃຫ້ມີການເຊັນບົດບັນທຶກຄວາມເຂົ້າໃຈລະຫວ່າງຄະນະມິດຕະພາບລັດຖະສະພາຍີ່ປຸ່ນ-ລາວ, ລາວ-ຍີ່ປຸ່ນ ແລະ ລະຫວ່າງສອງອົງການນິຕິບັນຍັດ ໃນໂອກາດທີ່ເໝາະສົມ; ສືບຕໍ່ຊ່ວຍສ້າງຊັບພະຍາກອນມະນຸດ ເພື່ອຍົກສູງຂີດຄວາມສາມາດໃຫ້ແກ່ພະນັກງານຂອງສະພາແຫ່ງຊາດລາວ ແລະ ການແລກປ່ຽນບົດຮຽນໃນຫົວຂໍ້ວິທະຍາສາດຕ່າງໆທີ່ສອງຝ່າຍມີຄວາມສົນໃຈຮ່ວມກັນ, ການສ້າງ ແລະ ປັບປຸງກົດໝາຍ, ການຕິດຕາມກວດກາ ຕາມພາລະບົດບາດຂອງອົງການນິຕິບັນຍັດ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

# ສຳເລັດການລົງຊຸກຍູ້, ຕິດຕາມກວດກາວຽກງານ ຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ




(ສພຂ) ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າຢູ່ຂັ້ນເມືອງ ເຄື່ອນໄຫວໃຫ້ສອດຄ່ອງກັບລະບຽບກົດໝາຍ ແລະ ໄດ້ຮັບການປັບປຸງໄປເທື່ອລະກ້າວ ໃນລະຫວ່າງວັນທີ 25-29 ທັນວາ 2023, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນນະຄອນຫຼວງວຽງຈັນ ໄດ້ລົງເຄື່ອນໄຫວຊຸກຍູ້, ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ຢູ່ທີ່ເມືອງສັງທອງ ແລະ ເມືອງປາກງື່ມ ນະຄອນຫຼວງວຽງຈັນ ໂດຍການນຳພາຂອງ ທ່ານ ນາງ ລຳພອຍ ສີອັກຄະຈັນ ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ພ້ອມດ້ວຍຄະນະ, ມີຮອງເຈົ້າເມືອງທັງ 2 ເມືອງດັ່ງກ່າວ, ບັນດາສະມາຊິກສະມາຊິກສະພາປະຊາຊົນ ປະຈຳເຂດເລືອກຕັ້ງເມືອງສັງທອງ ແລະ ເມືອງປາກງື່ມ ພ້ອມດ້ວຍບັນດາຫົວໜ້າ-ຮອງຫົວໜ້າຫ້ອງການເມືອງ ແລະ ວິຊາການຈຳນວນໜຶ່ງ ເຂົ້າຮ່ວມ.

ການລົງເຄື່ອນໄຫວຄັ້ງນີ້, ເປັນການລົງຕິດຕາມສະພາບລວມ ເພື່ອເກັບກຳບັນຫາ, ສະພາບຂໍ້ສະດວກ, ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານແຕ່ລະຂົງເຂດ, ບັນດາຜົນກະທົບ ແລະ ຂໍ້ສະເໜີຕ່າງໆຂອງປະຊາຊົນຢູ່ແຕ່ລະຫ້ອງການທີ່ກ່ຽວຂ້ອງ ເພື່ອຈະນຳສະເໜີຕໍ່ຂັ້ນເທິງໄດ້ພິຈາລະນາໄຂ ແລະ ເຮັດໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2023 ໃນຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ຢູ່ 2 ເມືອງດັ່ງກ່າວ ໃຫ້ບັນລຸຕາມຄາດໝາຍທີ່ກຳນົດໄວ້.

**(ນັກຂ່າວ ສພຂ)**

# ກອງປະຊຸມຄົບຄະນະ ປະຈຳປີ 2023 ຂອງຄະນະສະມາຊິກສະພາແຫ່ງຊາດແຂວງຜົ້ງສາລີ

(ສພຂ) ກອງປະຊຸມຄົບຄະນະປະຈຳປີ 2023 ຂອງຄະນະສະມາຊິກສະພາແຫ່ງຊາດ ຊຸດທີ IX ປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ ໄດ້ຈັດຂຶ້ນເມື່ອທ້າຍເດືອນທັນວາຜ່ານມາ, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ທອງສີ ເສົາສຸລິພົມ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 2 ແລະ ທ່ານ ສົມຈິດ ຫັບລະກອນ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 2; ເຂົ້າຮ່ວມມີທ່ານ ຄຳຜອຍ ວັນນະສານ ເຈົ້າແຂວງຜົ້ງສາລີ, ມີຮອງເຈົ້າແຂວງ, ບັນດາສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ຕາງໜ້າອົງການປົກຄອງແຂວງ, ແນວລາວສ້າງຊາດແຂວງ, ອົງການຈັດຕັ້ງມະຫາຊົນຂັ້ນແຂວງ, ສະຫະພັນນັກຮົບເກົ່າ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ແລະ ອົງການຈັດຕັ້ງພັກ-ລັດອ້ອມຂ້າງ.




ກອງປະຊຸມໄດ້ຮັບຟັງທ່ານ ສົມຈິດ ຫັບລະກອນ ລາຍງານກ່ຽວກັບການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024; ຈາກນັ້ນ, ຜູ້ແທນກອງປະຊຸມ, ກໍໄດ້ຜັດປ່ຽນກັນປະກອບຄຳເຫັນ ຕໍ່ກັບເນື້ອໃນ ແລະ ມີຄວາມຮັບຜິດຊອບສູງ.

ຕອນທ້າຍ, ປະທານກອງປະຊຸມໄດ້ມີຄຳເຫັນໂອ້ລົມ ໂດຍເນັ້ນໜັກໃຫ້ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ ເອົາໃຈໃສ່ຍົກສູງຄວາມຮັບຜິດຊອບຂອງຕົນໃນການເຄື່ອນໄຫວ ຈັດຕັ້ງປະຕິບັດພາລະບົດບາດ ສິດ ແລະ ໜ້າທີ່ໃນການຕິດຕາມກວດກາ ແລະ ເກັບກຳຂໍ້ມູນສະພາບການທາງສຽງທີ່ເກີດຂຶ້ນໃນສັງຄົມ ເພື່ອຮັບປະກັນໃຫ້ມະຕິກອງປະຊຸມໃນຄັ້ງນີ້ໄດ້ຮັບການຈັດຕັ້ງປະຕິບັດ ແລະ ມີຜົນສຳເລັດ; ຮຽກຮ້ອງມາຍັງທຸກພາກສ່ວນໃຫ້ການຮ່ວມມື ແລະ ເອົາໃຈໃສ່ປະກອບສ່ວນເປັນເຈົ້າການໃນການຈັດຕັ້ງປະຕິບັດບັນດາມະຕິກອງປະຊຸມຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງຜົ້ງສາລີ ໃຫ້ມີຜົນສຳເລັດຕາມຈຸດປະສົງທີ່ວາງໄວ້.

**(ສູນທອງ)**




# ສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ຮັບໃບຢັ້ງຢືນ 3 ດີ ປະຈຳປີ 2023



(ສພຂ) ສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງຫລວງນ້ຳທາ ໄດ້ເປີດກອງປະຊຸມສະຫຼຸບຮັບຮອງການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ຮອບທີ III ປະຈຳປີ 2023 ຂອງຕົນຂຶ້ນຢ່າງເປັນທາງການ ເມື່ອກາງເດືອນທັນວາ 2023 ຜ່ານມາ, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງສະຫາຍ ນາງ ວັນມະນີ ລີວົງລົງ ປະທານສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງ ເຂົ້າຮ່ວມມີສະຫາຍ ນາງ ອຸ່ນຫລ້າ ອ້ຽງລໍລາດ ເລຂາໜ່ວຍພັກ, ຮອງປະທານສະພາປະຊາຊົນແຂວງ ແລະ ສະຫາຍ ນາງ ເກສອນ ແສງຍະວົງ ປະທານຄະນະກຳມະການວັດທະນະທຳສັງຄົມ ແລະ ບັນດາເຜົ່າ, ຄະນະບໍລິຫານງານສະຫະພັນແມ່ຍິງແຂວງ ຜູ້ຊີ້ນຳຂົງເຂດນິຕິກຳ, ນິຕິບັນຍັດ ແລະ ຕຸລາການ ພ້ອມນັ້ນ ຍັງມີຕາງໜ້າສະຫະພັນແມ່ຍິງແຂວງ, ຕາງໜ້າໜ່ວຍສະຫະພັນແມ່ຍິງອ້ອມຂ້າງ ແລະ ສະມາຊິກແມ່ຍິງພາຍໃນໜ່ວຍ.

ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 3 ດີ ປະຈຳປີ 2023 ເຊິ່ງສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງມີສະມາຊິກທັງໝົດ 23 ສະຫາຍ, ໃນນັ້ນເປັນສະມາຊິກພັກສົມບູນ 12 ສະຫາຍ, ສຳຮອງ 2 ສະຫາຍ, ເປັນກຳມະການພັກແຂວງ, ເລຂາໜ່ວຍພັກ ແລະ ທັງເປັນຮອງປະທານສະພາປະຊາຊົນແຂວງ 1 ສະຫາຍ, ເປັນສະມາຊິກສະພາແຫ່ງຊາດ ທັງເປັນປະທານ ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ 1 ສະຫາຍ; ໃນໄລຍະ 1 ປີຜ່ານມາ ເອື້ອຍນ້ອງສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງ ສາມາດສ້າງລາຍຮັບໄດ້ຈາກການຮັບອາຫານວ່າງກອງປະຊຸມຕ່າງໆ ລວມທັງໝົດ 5.448.000 ກີບ ແລະ ຮັບຈາກຄະນະແມ່ຍິງຊຸດເກົ່າ 11.600.000 ກີບ; ໂດຍອີງໃສ່ມາດຖານເງື່ອນໄຂໃນການຈັດຕັ້ງປະຕິບັດເນື້ອໃນຄຳຂວັນ ແລະ ຂໍ້ແຂ່ງຂັນ 3 ດີຂອງສະຫະພັນແມ່ຍິງລາວ, ສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງ ສາມາດປະເມີນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ໄດ້ຕາມລະດັບຄາດໝາຍທີ່ວາງໄວ້ຄື ພົນລະເມືອງດີກວມ 100%, ພັດທະນາດີກວມ 98%, ສ້າງຄອບຄົວດີ 98%, ປະເມີນຄອບຄົວຕົວແບບໄດ້ 7 ຄອບຄົວ.

ໂອກາດດັ່ງກ່າວສະຫາຍ ນາງ ເກສອນ ແສງຍະວົງ ໄດ້ຂຶ້ນມອບໃບຢັ້ງຢືນ 3 ດີ ໃຫ້ໜ່ວຍສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງເປັນໜ່ວຍ 3 ດີ ຮອບທີ III ປະຈຳປີ 2023 ແລະ ເພື່ອເປັນການສືບຕໍ່ທິດທາງແຜນການໃນການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 3 ດີ ໃນຕໍ່ໜ້າ ສະມາຊິກພາຍໃນໜ່ວຍໄດ້ພ້ອມກັນຈັບມືແຂ່ງຂັນພ້ອມທັງໃຫ້ຄຳປະຕິຍານຕໍ່ກອງປະຊຸມວ່າຈະພ້ອມກັນສູ້ຊົນສືບຕໍ່ຮັກສາມູນເຊື້ອສ້າງພົນລະເມືອງດີໃຫ້ໄດ້ 100%, ພັດທະນາດີໃຫ້ໄດ້ 100%, ສ້າງຄອບຄົວດີໃຫ້ໄດ້100%.

**(ນັກຂ່າວ ສພຂ)**



# ກອງປະຊຸມຄົບຄະນະ ຄະນະກຳມະການ ສພຂ ວຽງຈັນ ປະຈຳປີ 2023



(ສພຂ) ເພື່ອເປັນການສະຫຼຸບຕີລາຄາຄືນຕໍ່ກັບຜົນການຈັດຕັ້ງປະຕິບັດວຽກງານໃນໄລຍະ 1 ປີຜ່ານມາ ແລະ ກຳນົດທິດທາງແຜນການປະຈຳປີ 2024 ຂອງ 3 ຄະນະກຳມະການ ຂອງສະພາປະຊາຊົນແຂວງວຽງຈັນ ຄື: ຄະນະກຳມະການເສດຖະກິດແຜນການ ແລະ ການເງິນ; ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ; ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ; ໃນລະຫວ່າງວັນທີ 21-22 ທັນວາ ຜ່ານມາ, ທີ່ສະໂມສອນໃຫຍ່ຫ້ອງວ່າການປົກຄອງແຂວງວຽງຈັນ, ໄດ້ມີກອງປະຊຸມຄົບຄະນະ 3 ຄະນະກຳມະການ ປະຈຳປີ 2023 ໂດຍການເປັນປະທານຂອງ ທ່ານ ບຸນສອນ ເຜີດລາວັນ ປະທານສະພາປະຊາຊົນ ເຂົ້າຮ່ວມມີຮອງເຈົ້າແຂວງ, ບັນດາຄະນະປະຈຳພັກແຂວງ, ປະທານ-ຮອງປະທານຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງທີ່ສັງກັດໃນແຕ່ລະຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການທຽບເທົ່າ ຕະຫຼອດຮອດພະນັກງານສະພາປະຊາຊົນແຂວງ.

ກອງປະຊຸມໄດ້ຮັບຟັງບົດສະຫຼຸບການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຂອງ 3 ຄະນະກຳມະການ; ບົດລາຍງານຂອງບັນດາພະແນກການ ພ້ອມທັງໄດ້ຮັບຟັງການອະທິບາຍຊີ້ແຈງກ່ຽວກັບບັນຫາທີ່ພົ້ນເດັ່ນ ແລະ ການປະຕິບັດຄາດໝາຍທີ່ຍັງບໍ່ທັນບັນລຸ ເຊິ່ງຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້; ໂອກາດດັ່ງກ່າວ, ປະທານກອງປະຊຸມກໍໄດ້ມີຄຳເຫັນເຈາະຈີ້ມ ຕໍ່ກັບບັນດາເນື້ອໃນບົດສະຫຼຸບຂອງແຕ່ລະກຳມະການ ເພື່ອເປັນທິດໃຫ້ແກ່ບັນດາຜູ້ແທນກອງປະຊຸມ (ສະມາຊິກສະພາປະຊາຊົນແຂວງ) ໄດ້ປະກອບຄຳຄິດເຫັນຕໍ່ກັບເນື້ອໃນດັ່ງກ່າວຢ່າງມີຄວາມຮັບຜິດຊອບສູງ ເພື່ອເຮັດໃຫ້ເນື້ອໃນກອງປະຊຸມໃນຄັ້ງນີ້ຄົບຖ້ວນ, ສົມບູນ ແລະ ຖືກຕ້ອງສອດຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ຕາມກົດໝາຍກຳນົດໄວ້, ຮັບປະກັນເຮັດໃຫ້ການຈັດຕັ້ງປະຕິບັດໜ້າທີ່ວຽກງານໄດ້ຮັບຜົນສຳເລັດ ແລະ ໄດ້ຮັບການປັບປຸງໃຫ້ເຂັ້ມແຂງໄປເທື່ອລະກ້າວ. ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມກໍໄດ້ຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງມີຈຸດສຸມ ສອດຄ່ອງຕາມຈຸດປະສົງເປົ້າໝາຍທີ່ກຳນົດໄວ້.

ໃນຕອນທ້າຍ, ທ່ານປະທານກອງປະຊຸມຍັງໄດ້ມີຄຳເຫັນໂອ້ລົມ ໂດຍທ່ານໄດ້ຕີລາຄາສູງຕໍ່ການຈັດຕັ້ງປະຕິບັດວຽກງານ ຂອງ 3 ຄະນະກຳມະການ ແລະ ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ຍາດມາໄດ້, ຍົກສູງຄວາມຮັບຜິດຊອບການເມືອງຂອງຕົນເຂົ້າໃນການຄົ້ນຄ້ວາປະກອບຄຳເຫັນໃສ່ບົດສະຫຼຸບຂອງ 3 ຄະນະກຳມະການ ພ້ອມຍັງໄດ້ເນັ້ນໜັກໃຫ້ 3 ຄະນະກຳມະການ ຈົ່ງໄດ້ເພີ່ມທະວີການພົວພັນປະສານງານໃຫ້ກົມກຽວກັນ ລະຫວ່າງບັນດາຄະນະກຳມະການດ້ວຍກັນ, ຄະນະກຳມະການກັບຂະແໜງການທີ່ກ່ຽວຂ້ອງຂອງແຂວງ, ເມືອງ ໃນການແລກປ່ຽນສະໜອງຂໍ້ມູນ, ຕ້ອງສຸມໃສ່ຜັນຂະຫຍາຍບັນດານິຕິກຳ, ກົດໝາຍລະບຽບການຕ່າງໆທີ່ໄດ້ຮັບຮອງ ແລະ ວາງອອກໃນໄລຍະຜ່ານມາ ສືບຕໍ່ປັບປຸງແບບແຜນວິທີການເຮັດວຽກຂອງຕົນໃຫ້ມີຄຸນນະພາບອັນໃໝ່ ບົນພື້ນຖານການປັບປຸງກົງຈັກໃໝ່ ສືບຕໍ່ເອົາໃຈໃສ່ສູ້ຊົນຈັດຕັ້ງປະຕິບັດບັນດາຄາດໝາຍທີ່ຍັງບໍ່ທັນບັນລຸ.

**(ນັກຂ່າວ ສພຂ)**






# ຜ່ານມະຕິວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳ ແລະ ອະນຸກຳມະການຊ່ວຍວຽກກອງປະຊຸມສະໄໝສາມັນເທື່ອທີ 6



(ສພຂ) ໃນວັນທີ 18 ທັນວາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ, ໄດ້ມີການຜ່ານມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳ ແລະ ອານຸກຳມະການຊ່ວຍວຽກກອງປະຊຸມສະໄໝສາມັນ ເທື່ອທີ 6 ສະພາປະຊາຊົນແຂວງ, ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງ, ມີທ່ານ ຄຳເຜີຍ ງອນວັນຄຳ ຮອງປະທານສະພາປະຊາຊົນແຂວງ, ບັນດາຄະນະປະຈຳ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ຕາງໜ້າຄະນະເລຂາທິການ ໄດ້ຜ່ານມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ເລກທີ 1522/ສພຂ, ລົງວັນທີ 7 ທັນວາ 2023 ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳ ແລະ ອານຸກຳມະການຊ່ວຍວຽກກອງປະຊຸມສະໄໝສາມັນ ເທື່ອທີ6ຂອງສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II. ຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ປະກອບຄຳຄິດເຫັນ ແລະ ມີຄຳສະເໜີແລກປ່ຽນເຊິ່ງກັນ ແລະ ກັນຢ່າງກົງໄປກົງມາ ກ່ຽວກັບການກະກຽມເນື້ອໃນ, ການປະສານງານກັບພະແນກການ ແລະ ອົງການກ່ຽວຂ້ອງໃນໄລຍະຜ່ານມາເຫັນວ່າມີຂໍ້ສະດວກ, ຂໍ້ຫຍຸ້ງຫຍັງແດ່ ແລະ ບັນຫາທີ່ຍັງຄົງຄ້າງທີ່ຄວນຈະມີວິທີການແກ້ໄຂແນວໃດ.

**(ນັກຂ່າວ ສພຂ)**

# ມອບເຄື່ອງໃຫ້ຄອບຄົວທີ່ຖືກອັກຄີໄພ ຢູ່ບ້ານພູໄຊ ເມືອງວຽງໄຊ



(ສພຂ) ໃນວັນທີ 28 ທັນວາ 2023 ຕາງໜ້າໃຫ້ສະພາປະຊາຊົນແຂວງຫົວພັນ ນຳໂດຍ ທ່ານ ຄຳຟອງ ກົ້ວມີໄຊ ເລຂາທິການສະພາປະຊາຊົນແຂວງ ພ້ອມຄະນະສະມາຊິກສະພາປະຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ວຽງໄຊ ໄດ້ລົງມອບເຄື່ອງຊ່ວຍເຫຼືອບັນເທົາທຸກໃຫ້ ຄອບຄົວ ທ່ານ ລີທໍ່ ຢູ່ບ້ານພູໄຊ ເມືອງວຽງໄຊ ແຂວງຫົວພັນ ທີ່ໄດ້ຮັບເຄາະຮ້າຍຈາກອັກຄີໄພ ໄຟໄໝ້; ເຫດດັ່ງກ່າວເກີດຂຶ້ນໃນ ເວລາ 03 ໂມງ 30 ນາທີ ຕອນເຊົ້າ ຂອງວັນທີ 24 ທັນວາ 2023 ຜ່ານມາ ເຮັດໃຫ້ເຮືອນແລະເຄື່ອງຕ່າງໆພາຍໃນເຮືອນຖືກໄໝ້ໝົດ ລວມເປັນມູນຄ່າເສຍຫາຍທັງໝົດ 109.400.000 ລ້ານກີບ (ໜຶ່ງຮ້ອຍເກົ້າລ້ານສີ່ແສນກີບ) ແຕ່ໂຊກດີ ທີ່ບໍ່ມີຜູ້ໄດ້ຮັບບາດເຈັບ ແລະ ເສຍຊີວິດ.

ກ່າວມອບເຄື່ອງຄັ້ງນີ້ ໂດຍແມ່ນ ທ່ານ ຄຳຟອງ ກົ້ວມີໄຊ ແລະ ກ່າວຮັບໂດຍຄອບຄົວທີ່ຖືກເຄາະຮ້າຍ ເຄື່ອງທີ່ນຳມາຊ່ວຍເຫຼືອຄັ້ງນີ້ແມ່ນໄດ້ມາຈາກການລະດົມນຳບຸກຄົນ, ບໍລິສັດ ແລະ ຫ້າງຮ້ານຕ່າງໆພາຍໃນແຂວງ ແລະ ຕ່າງແຂວງ ລວມມີ ເຄື່ອງນຸ່ງຫົ່ມ, ເຄື່ອງໃຊ້ຄົວເຮືອນ ລວມມູນຄ່າທັງໝົດ 1.500.000 ກີບ (ໜຶ່ງລ້ານຫ້າແສນກີບ)

ໂອກາດດຽວກັນນີ້ ທ່ານເລຂາທິການສະພາປະຊາຊົນແຂວງ ກໍໄດ້ກ່າວສະແດງຄວາມເສຍໃຈຕໍ່ເຫດການທີ່ເກີດຂຶ້ນ ແລະ ຍັງຮຽກຮ້ອງມາຍັງຄອບຄົວທີ່ຖືກຜົນກະທົບ ຈົ່ງເອົາໃສ່ສ້າງເສດຖະກິດຄອບຄົວໃຫ້ນັບມື້ນັບດີຂຶ້ນ ແລະ ມີສະຕິຕໍ່ປາກົດການຫຍໍ້ທໍ້ຕ່າງໆ ການນຳໃຊ້ໄຟເຂົ້າໃນການຮັບໃຊ້ຊີວິດປະຈຳວັນໃຫ້ດີກວ່າເກົ່າ ເພື່ອບໍ່ໃຫ້ເຫດການດັ່ງກ່າວເກີດຂຶ້ນໃນຕໍ່ໜ້າ ພ້ອມທັງຮຽກຮ້ອງໃຫ້ອົງການປົກຄອງບ້ານ ຈົ່ງສືບຕໍ່ຊ່ວຍເຫຼືອເບິ່ງແຍງຄອບຄົວທີ່ຖືກເຄາະຮ້າຍ, ເອົາໃຈໃສ່ເຮັດວຽກງານປ້ອງກັນຕ້ານທຸກປາກົດການຫຍໍ້ທໍ້ທີ່ຈະເກີດຂຶ້ນພາຍໃນບ້ານກໍຄືໃນສັງຄົມ.

**(ນັກຂ່າວ ສພຂ)**

# ຍົກສູງຄຸນນະພາບດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 6




(ສພຂ) ໃນລະຫວ່າງວັນທີ 25-26 ທັນວາ 2023 ສະພາປະຊາຊົນແຂວງສະຫວັນນະເຂດ ໄດ້ຈັດກອງປະຊຸມຍົກສູງຄຸນນະພາບດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II ທີ່ຫ້ອງປະຊຸມຊັ້ນ 4 ຂອງຫ້ອງວ່າການແຂວງສະຫວັນນະເຂດ ໂດຍການເປັນປະທານຂອງທ່ານ ກົງແກ້ວ ມິວໍລະຈັກ ປະທານສະພາປະຊາຊົນແຂວງ, ມີບັນດາຮອງປະທານສະພາປະຊາຊົນແຂວງ, ຮອງເຈົ້າແຂວງ, ບັນດາສະມາຊິກສະພາປະຊາຊົນແຂວງ,ຕາງໜ້າພະແນກການອອ້ມຂ້າງແຂວງ, ອົງການລັດທຽບເທົ່າພະແນກການຂັ້ນແຂວງ, ອົງການຈັດຕັ້ງມະຫາຊົນ ພ້ອມດ້ວຍວິຊາການຈາກພະແນກການ, ສະພາປະຊາຊົນແຂວງຈຳນວນໜຶ່ງ ເຂົ້າຮ່ວມທັງໝົດ 122 ຄົນ, ຍິງ 34 ຄົນ.

ກອງປະຊຸມຄັ້ງນີ້ ຈັດຂຶ້ນເປັນຄັ້ງທຳອິດ ເພື່ອເຮັດໃຫ້ຜູ້ເຂົ້າຮ່ວມກອງປະຊຸມໄດ້ຄົ້ນຄວ້າປະກອບຄຳເຫັນມີລັກສະນະວິຊາການ ເປັນການຊຸກຍູ້ການປະຕິບັດພາລະບົດບາດຂອງແຕ່ລະພາກສ່ວນໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ທັງຮັບປະກັນບັນດາດ້ານເນື້ອໃນທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ຮັບຜົນດີ ແລະ ມີປະສິດທິພາບສູງເປັນຕົ້ນແມ່ນ ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງແຂວງ, ບົດລາຍງານຂອງອົງການກວດສອບ ປະຈຳພາກພາງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານກາງສະໄໝ ຂອງແຜນການ5ປີ(2021-2025) ແລະ ທິດທາງແຜນການ ທ້າຍສະໄໝ ຮອດປີ 2025; ການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະທິດທາງແຜນການປະຈຳປີ 2024; ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022; ບົດລາຍງານອົງການກວດກາລັດແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ ຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025; ການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ບົດລາຍງານຜົນການກວດກາຕາມຜົນການກວດສອບ ປະຈຳປີ 2022; ການປະເມີນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ ຈຳນວນ 4 ສະບັບ, ແຜນການສ້າງແລະປັບປຸງນິຕິກຳໃຕ້ກົດໝາຍ ຈຳນວນ 2 ສະບັບ.

ໃນຕອນທ້າຍ, ທ່ານ ກົງແກ້ວ ມິວໍລະຈັກ ກໍໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມວ່າ: ການຈັດກອງປະຊຸມຄັ້ງນີ້ ສະແດງໃຫ້ເຫັນວ່າບັນດາສະມາຊິກສະພາປະຊາຊົນແຂວງ ມີຄວາມຮັບຜິດຊອບສູງໃນການປະຕິບັດໜ້າທີ່ການ ເມືອງຂອງຕົນແລະບັນດາພາກສ່ວນກ່ຽວຂ້ອງຕ່າງໆ ທີ່ກະກຽມເນື້ອໃນລາຍງານຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II ຈຶ່ງສືບຕໍ່ນຳເອົາບົດລາຍງານໄປປັບປຸງຕາມພາລະບົດບາດ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ເພື່ອຮັບປະກັນໃນການພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນດັ່ງກ່າວ ສຳເລັດຕາມແຜນການທີ່ວາງໄວ້.

**(ນັກຂ່າວ ສພຂ)**

# ກອງປະຊຸມສຳມະນາຍົກສູງຂີດຄວາມສາມາດທາງດ້ານນິຕິກຳໃຕ້ກົດໝາຍຂັ້ນແຂວງ



(ສພຂ) ເພື່ອຊຸກຍູ້ໃຫ້ອົງການປົກຄອງຂັ້ນແຂວງໃນການຄົ້ນຄວ້າ ແລະ ຮັບປະກັນໃຫ້ແກ່ການສ້າງ, ການປັບປຸງ, ການຈັດຕັ້ງປະຕິບັດ, ການປະເມີນ ແລະ ການຕິດຕາມກວດກາການປະເມີນ ນິຕິກຳໃຕ້ກົດໝາຍ ຂອງອົງການລັດຂັ້ນແຂວງ, ຕາມພາລະບົດບາດ, ສິດແລະໜ້າທີ່ດ້ານນິຕິບັນຍັດ, ນິຕິກຳຂອງສະພາປະຊາຊົນຂັ້ນແຂວງ. ໃນລະຫວ່າງວັນທີ 28-29 ທັນວາ 2023 ທີ່ເມືອງນາກາຍ ແຂວງຄຳມ່ວນ; ສະພາປະຊາຊົນແຂວງຄຳມ່ວນ ໄດ້ຈັດກອງປະຊຸມສຳມະນາ ການສ້າງ, ການປັບປຸງ, ການຈັດຕັ້ງປະຕິບັດ, ການປະເມີນ ແລະ ການຕິດຕາມກວດກາການປະເມີນນິຕິກຳໃຕ້ກົດໝາຍຂອງອົງການລັດຂັ້ນແຂວງຂຶ້ນ, ໂດຍການເປັນປະທານຂອງ ບຸນມີ ພິມມະສອນ ປະທານສະພາປະຊາຊົນແຂວງຄຳມ່ວນ, ເຂົ້າຮ່ວມມີຮອງປະທານສະພາປະຊາຊົນແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ 10 ຕົວເມືອງ, ບັນດາພະແນກການອ້ອມຂ້າງແຂວງ, ນັກວິທະຍາກອນຈາກສູນກາງ ແລະ ພະນັກງານເສນາທິການ ຊ່ວຍວຽກຂອງສະພາປະຊາຊົນແຂວງຄຳມ່ວນ ລວມທັງໝົດ 116 ທ່ານ, ຍິງ 43 ທ່ານ.

ໃນກອງປະຊຸມ ຜູ້ເຂົ້າຮ່ວມໄດ້ຮັບຟັງການເຜີຍແຜ່ກົດໝາຍ ວ່າດ້ວຍການສ້າງນິຕິກຳ (ສະບັບປັບປຸງ)ສະບັບເລກ06/ສພຊ, ລົງວັນທີ 16 ພະຈິກ 2021; ຄູ່ມືການສ້າງນິຕິກຳໃຕ້ກົດໝາຍ; ການສ້າງບົດສະເໜີຮ່າງນິຕິກຳໃຕ້ກົດໝາຍ; ການສ້າງບົດປະເມີນຜົນກະທົບຮ່າງນິຕິກຳ; ການກວດກາຄວາມຖືກຕ້ອງຂອງຮ່າງນິຕິກຳໃຕ້ກົດໝາຍ; ຄຳແນະນຳ ກ່ຽວກັບການສ້າງບົດວິພາກ ແລະ ຮ່າງນິຕິກຳຂອງກະຊວງພາຍໃນ ສະບັບເລກທີ 06/ພນ, ລົງວັນທີ 28 ຕຸລາ 2014 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດດຳລັດ ວ່າດ້ວຍເອກະສານທາງການ ສະບັບເລກທີ 02/ພນ, ລົງວັນທີ 05 ເມສາ 2016; ການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ;ການປະເມີນການຈັດຕັ້ງປະຕິບັດກົດໝາຍແລະນິຕິກຳໃຕ້ກົດໝາຍ; ເຜີຍແຜ່ມະຕິກອງປະຊຸມສະພາປະຊາຊົນແຂວງ ສະບັບເລກທີ 53, 54, 55/ສພຂ.ຄມ, ລົງວັນທີ 26 ຕຸລາ 2023 ວ່າດ້ວຍການຮັບຮອງເອົານິຕິກຳໃຕ້ກົດໝາຍ ຈຳນວນ 3 ສະບັບ; ຈາກນັ້ນ, ກອງປະຊຸມໄດ້ມີການຄົ້ນຄວ້າແລກປ່ຽນ ບົດຮຽນເຊິ່ງກັນ ແລະ ກັນ ໃຫ້ມີເນື້ອໃນທີ່ໜັກແໜ້ນ, ພ້ອມກັນຍົກສູງຄວາມຮັບຜິດຊອບໂດຍສຸມໃສ່ການຕັ້ງຄຳຖາມສົນທະນາແລກປ່ຽນແຕ່ລະຫົວຂໍ້ອັນໄດ້ເຮັດໃຫ້ເຂົ້າສູ່ລວງເລິກ ແລະ ມີໝາກຜົນຫຼາຍຂຶ້ນ.

ໂອກາດດັ່ງກ່າວ, ທ່ານ ປະທານສະພາປະຊາຊົນແຂວງຄຳມ່ວນ ໄດ້ມີຄຳເຫັນໂອ້ລົມວ່າ: ກອງປະຊຸມສຳມະນາຄັ້ງນີ້ ແມ່ນການຖ່າຍທອດທັກສະຄວາມຮູ້, ຄວາມສາມາດປະສົບການໃນດ້ານຕ່າງໆຂອງບັນດາວິທະຍາກອນ ຈາກກະຊວງຍຸຕິທຳ,ກະຊວງພາຍໃນ,ສະພາແຫ່ງຊາດ; ພ້ອມຍັງໄດ້ເນັ້ນໃຫ້ຮູ້ຕື່ມອີກວ່າ: ເພື່ອເຮັດໃຫ້ການສ້າງ, ປັບປຸງນິຕິກຳໃຕ້ກົດໝາຍຜັນຂະຫຍາຍເນື້ອໃນຈິດໃຈຕາມແຜນທີ່ວ່າງໄວ້, ເຊື່ອໝັ້ນວ່າບັນດາທ່ານທີ່ເຂົ້າຮ່ວມຈະນຳເອົາເນື້ອໃນ ແລະ ບົດຮຽນໃນຄັ້ງນີ້ ໄປຈັດຕັ້ງຜັນຂະຫຍາຍ ແລະປະຕິບັດໃຫ້ມີຜົນເປັນຮູບປະທຳໃນວຽກງານຕົວຈິງ ແລະ ເປັນປະໂຫຍດສູງສຸດ.

ກອງປະຊຸມສຳມະນາໃນເທື່ອນີ້ ໄດ້ຮັບການສະໜັບສະໜູນໂດຍ: ມູນນິທິເອເຊຍ (TAF).

**(ເອື້ອ ມະໂນສິງ)**

# ກອງປະຊຸມຮ່ວມລະຫວ່າງ ສະພາປະຊາຊົນແຂວງ ກັບ ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ




(ສພຂ) ໃນຕອນບ່າຍຂອງວັນທີ 14 ທັນວາ 2023 ນີ້ ທີ່ຫ້ອງປະຊຸມສະໂມສອນແຂວງສາລະວັນ ໄດ້ເປີດກອງປະຊຸມຮ່ວມລະຫວ່າງ ສະພາປະຊາຊົນແຂວງ ກັບ ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນແຂວງສາລະວັນ; ໂດຍການເປັນປະທານຮ່ວມຂອງ ທ່ານ ສີເຮັງ ທອມສິມບັດ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງ, ທ່ານ ຄຳຕາ ໂຮ່ຊົງເລືອງ ຄະນະປະຈຳພັກແຂວງ ກຳມະການສູນກາງແນວລາວສ້າງຊາດ ປະທານອົງການແນວລາວສ້າງຊາດແຂວງ ຜູ້ຊີ້ນຳວຽກງານອົງການຈັດຕັ້ງມະຫາຊົນ,ເຂົ້າຮ່ວມມີຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ, ອົງການຈັດຕັ້ງມະຫາຊົນ ແລະ ຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນທີ່ປະຊຸມ ທ່ານ ສົມພອນ ແສງສຸລິຈັນ ເລຂາທິການ ສພຂ ໄດ້ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານໄລຍະກາງສະໄໝຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ ຂອງສະພາປະຊາຊົນແຂວງສາລະວັນໃນຜ່ານມາ ພ້ອມທັງຜັດປ່ຽນກັນປະກອບຄຳຄິດຄຳເຫັນ ໄດ້ລົງເລິກໃສ່ບາງບັນຫາທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຕາມພາລະບົດບາດຂອງສະພາປະຊາຊົນແຂວງ, ອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ແຂວງສາລະວັນ ເຊິ່ງໄດ້ຮ່ວມກັນແລກປ່ຽນຄຳຄິດຄຳເຫັນພ້ອມທັງສະເໜີແນະກ່ຽວກັບບັນຫາພື້ນຖານຂອງທ້ອງຖິ່ນທີ່ປະຊາຊົນໄດ້ສະເໜີຜ່ານສະມາຊິກສະພາປະຊາຊົນແຂວງ, ອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ເຖິງອົງການປົກຄອງແຂວງໃຫ້ມີການປັບປຸງແກ້ໄຂ ເປັນຕົ້ນ: ການແກ້ໄຂຄວາມທຸກຍາກ, ບັນຫາລາຄາສິນຄ້າ, ລາຄານ້ຳມັນເຊື້ອໄຟທີ່ເພີ່ມຂຶ້ນແລະບັນຫາອື່ນໆ ທີ່ກ່ຽວພັນກັບການປະຕິບັດກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ.

ທັງນີ້ເພື່ອເຮັດໃຫ້ການປະຕິບັດມະຕິຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມຂອງລັດເວົ້າສະເພາະແມ່ນການປະຕິບັດ 2 ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະການແກ້ໄຂບັນຫາຢາເສບຕິດ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກທິດ, ທັງເປັນການສ່ອງແສງ ແລະ ປຶກສາຫາລືກັນຮ່ວມກັນເພື່ອຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂບັນຫາດ້ວຍຄວາມຮັບຜິດຊອບສູງຕາມກົດໝາຍກຳນົດໄວ້.

**(ດີລຳພົນ ພົມມະຈັນ)**

## ຕໍ່ໜ້າ...

(ຕໍ່ຈາກໜ້າ 1)

ເປັນເຫດການສຳຄັນອັນໜຶ່ງ ເປັນບາດລ້ຽວທີ່ເປັນລັກສະນະຕັດສິນ ໃນພາລະກິດຕໍ່ສູ້ປົດປ່ອຍຊາດ.

ພາຍໃຕ້ການນຳພາຂອງພັກ ປປ ລາວ, ກຳລັງປະກອບອາວຸດເຮົາ ເລີ່ມຈາກເປັນກອງໂຄສະນາປະກອບອາວຸດ ທີ່ສ້າງຕັ້ງຂຶ້ນໃນທ້ອງຖິ່ນຕ່າງໆ ປະກອບດ້ວຍອາວຸດ-ຍຸດໂທປະກອນ ແບບປະຖົມປະຖານ ໄດ້ເຕີບໃຫຍ່ຂຶ້ນຢ່າງໄວວາທາງດ້ານຈຳນວນ ແລະ ຄຸນນະພາບ, ກາຍເປັນກອງທັບທີ່ມີຫຼາຍກົມກອງ-ເຫຼົ່າຮົບເຂັ້ມແຂງ, ສູ້ຮົບເດັດດ່ຽວອາດຫານ, ຍິ່ງຕີກໍຍິ່ງເຕີບໃຫຍ່ ຍິ່ງຕີກໍຍິ່ງອົງອາດກ້າແກ່ນ ແລະ ຍາດໄດ້ໄຊຊະນະອັນໃຫຍ່ຫຼວງເປັນກ້າວໆມາ. ກອງທັບເຮົາ ໄດ້ມີບົດຮຽນອັນລ້ຳຄ່າ ແລະ ປະສົບການອັນໃຫຍ່ຫຼວງໃນວຽກງານຂົນຂວາຍ ກໍ່ສ້າງຮາກຖານການເມືອງ ແລະ ວຽກງານເພີ່ມພູນຜະລິດຜົນ ກຸ້ມຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ເປັນກຳລັງຫຼັກແຫຼ່ງແກ່ນສານໃນພາລະກິດປະຕິວັດຕໍ່ສູ້ ເພື່ອຍາດເອົາເອກະລາດແຫ່ງຊາດ, ອິດສະຫຼະພາບ ແລະ ຄວາມຢູ່ເຢັນເປັນສຸກມາໃຫ້ປະຊາຊົນລາວບັນດາເຜົ່າ.

ພາຍຫຼັງປະເທດຊາດ ໄດ້ຮັບການປົດປ່ອຍຢ່າງສົມບູນ, ສະຖາປະນາເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975, ກອງທັບປະຊາຊົນລາວ ໄດ້ສືບຕໍ່ປົກປັກຮັກສາ ແລະ ເສີມຂະຫຍາຍທາດແທ້ ແລະ ມູນເຊື້ອອັນສະຫງ່າງາມຂອງຕົນ, ຍາມໃດກໍເຊີດຊູສະຕິລະວັງຕົວກຽມພ້ອມສູ້ຮົບ ແລະ ສູ້ຮົບມີໄຊ, ເປັນກຳລັງຫຼັກແຫຼ່ງ ປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ ເຮັດໜ້າທີ່ປົກປັກຮັກສາເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດໄວ້ໄດ້ຢ່າງໝັ້ນຄົງ, ຮັບປະກັນສະຖຽນລະພາບທາງດ້ານການເມືອງໄດ້ຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບປອດໄພ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງປະເທດຊາດ ບົນເສັ້ນທາງກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມ. ປະທານ ໄກສອນ ພົມວິຫານ ເວົ້າວ່າ; “ເວລາໃດ ກອງທັບກໍນຳໜ້າທຸກວຽກງານ ເດັດດ່ຽວໜຽວແໜ້ນ ຜ່ານຜ່າອຸປະສັກສຳເລັດທຸກໜ້າທີ່ຕີຊະນະສັດຕູທຸກໂຕ, ສົມແລ້ວເປັນກຳລັງແກ່ນສານທີ່ເຂັ້ມແຂງຂອງການປະຕິວັດ, ເປັນເຄື່ອງມືອັນແຫຼມຄົມຂອງພັກ”.

ຜ່ານການເຝິກຝົນຫຼໍ່ຫຼອມ ແລະທົດສອບ ໃນແປວໄຟຂອງສົງຄາມຕໍ່ສູ້ ເພື່ອຍາດເອົາເອກະລາດແຫ່ງຊາດ, ໃນສະພາບແວດລ້ອມ ແລະ ເງື່ອນໄຂສຸດທີ່ຫຍຸ້ງຍາກລຳບາກນັ້ນ. ກອງທັບເຮົາ ໄດ້ສ້າງວີລະກຳອັນລ້ຳເລີດຫຼາຍປະການ, ສ້າງປະຫວັດສາດຍຸກໃໝ່, ທາດແທ້ ແລະ ມູນເຊື້ອວິລະຊົນຂອງຊາດລາວວິລະຊົນ ຢ່າງສະຫງ່າງາມ ໂດຍສະເພາະ ທາດແທ້ຂອງກອງທັບປະຊາຊົນລາວ ແມ່ນກອງທັບຂອງປະຊາຊົນ ທີ່ຕໍ່ສູ້ ເພື່ອປົດປ່ອຍປະຊາຊົນ ອອກຈາກການກົດຂີ່ຂູດຮີດຂອງສັກດີນາ ແລະ ຕ່າງຊາດ. ຕໍ່ສູ້ເພື່ອນຳເອົາເອກະລາດ ອຳນາດອະທິປະໄຕ ມາໃຫ້ປະຊາຊົນ ໂດຍພາຍໃຕ້ການຊີ້ນຳ-ນຳພາຂອງພັກ ເຊິ່ງເປັນຜູ້ກໍ່ຕັ້ງສຶກສາອົບຮົມ ແລະ ເຝິກຝົນຫຼໍ່ຫຼອມ ໃຫ້ເປັນນັກຮົບທີ່ມີທັດສະນະຫຼັກໝັ້ນ, ມີຄວາມຈົງຮັກພັກດີ, ມີຄວາມຊື່ສັດບໍລິສຸດ ແລະ ແບບແຜນລະບຽບທີ່ເຂັ້ມງວດ ສົມວ່າ: ເປັນກຳລັງຂອງປະຊາຊົນ ຂອງຊົນຊັ້ນຜູ້ອອກແຮງງານ ແລະ ເປັນເຄື່ອງມືອັນແຫຼມຄົມຂອງພັກ ຕະຫຼອດມາ. ກອງທັບປະຊາຊົນລາວ ແມ່ນມີມູນເຊື້ອອັນສະຫງ່າອົງອາດ ເປັນຕົ້ນ ມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ປະຊາຊົນ, ຕໍ່ອຸດົມການສັງຄົມນິຍົມ, ມີນ້ຳໃຈຕໍ່ສູ້ພິລະອາດຫານ, ກ້າແກ່ນໜຽວແໜ້ນ, ມີໄຫວພິບ ແລະ ປະດິດສ້າງ, ມີນ້ຳໃຈດຸໝັ່ນຂະຫຍັນພຽນ, ອອກແຮງເພີ່ມພູນຜະລິດຜົນ ແລະ ປະຢັດມັດທະຍັດ, ມີຄວາມສາມັກຄີອັນແໜ້ນແຟ້ນກັບປະຊາຊົນບັນດາເຜົ່າ; ສາມັກຄີກັບກອງທັບປະຊາຊົນບັນດາປະເທດສັງຄົມນິຍົມອ້າຍນ້ອງ ແລະ ບັນດາປະເທດເພື່ອນມິດທີ່ກ້າວໜ້າໃນໂລກ. ເວລາໃດກອງທັບກໍຮັກສາມູນເຊື້ອອັນດີງາມ ມີປະຊາທິປະໄຕ ແລະ ມີລະບຽບວິໄນ.

ເສີມຂະຫຍາຍທາດແທ້ແລະມູນເຊື້ອອັນສະຫງ່າອົງອາດຂອງກອງທັບປະຊາຊົນລາວເພື່ອເສີມຂະຫຍາຍທາດແທ້ ແລະ ມູນເຊື້ອຂອງກອງທັບປະຊາຊົນລາວ. ຄະນະພັກ, ຄະນະບັນຊາການທຸກຂັ້ນຕະຫຼອດເຖິງພະນັກງານ-ນັກຮົບ ໃນກອງທັບປະຊາຊົນລາວ ຈຶ່ງຕັ້ງໜ້າເສີມຂະຫຍາຍທາດແທ້ ແລະ ມູນເຊື້ອອັນສະຫງ່າງາມຂອງຕົນ, ຍົກສູງນ້ຳໃຈຮັກເຊື້ອແພງຊາດ, ຄວາມຈົງຮັກພັກດີຕໍ່ປະເທດຊາດຕໍ່ພັກ ແລະ ຕໍ່ປະຊາຊົນ, ເຊື່ອມຊຶມ, ກຳແໜ້ນແນວທາງປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການຂອງພັກ, ກົດໝາຍຂອງລັດ ແລະ ທັງເປັນແບບຢ່າງໃນການຈັດຕັ້ງປະຕິບັດ, ຍົກສູງສະຕິລະວັງຕົວກຽມພ້ອມທັບມ້າງທຸກກົນອຸບາຍມ້າງເພທຳລາຍປະເທດເຮົາ. ເດັດດ່ຽວປົກປັກຮັກສາເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດໄວ້ໃຫ້ໝັ້ນຄົງ, ຮັບປະກັນສະຖຽນລະພາບ ແລະ ຄວາມໝັ້ນຄົງ ຄວາມສະຫງົບພາຍໃນ ໃຫ້ໄດ້ຢ່າງໜັກແໜ້ນ. ອອກແຮງປັບປຸງ-ກໍ່ສ້າງກຳລັງໃຫ້ໜັກແໜ້ນເຂັ້ມແຂງ ຕາມທິດກໍ່ສ້າງກອງທັບປະຕິວັດ ທີ່ມີລະບຽບແບບແຜນ ແລະ ທັນສະໄໝ. ຍົກສູງຄວາມສາມາດໃນການນຳພາ, ບັນຊາການກຽມພ້ອມສູ້ຮົບ ເປັນຕົ້ນ ແມ່ນຕັ້ງໜ້າເຝິກແອບສິລະປະຍຸດ-ຍຸດທະວິທີ, ຍຸດທະສາດ-ຍຸດທະບັ້ນຮົບໃຫ້ມີຄວາມຊຳນິຊຳນານສາມາດສູ້ຮົບໄດ້ໃນທຸກກໍລະນີ. ເພີ່ມທະວີຄວາມສາມັກຄີ ລະຫວ່າງ ພະນັກງານກັບນັກຮົບໃຫ້ໜັກແໜ້ນ, ປັບປຸງການພົວພັນ ລະຫວ່າງ ກອງທັບກັບປະຊາຊົນ “ຄືປາກັບນ້ຳ” ໃຫ້ແໜ້ນແຟ້ນ, ຮັບປະກັນການເບິ່ງແຍງລ້ຽງດູກອງທັບເປັນຢ່າງດີ. ບັນດາກົມກອງ-ເຫຼົ່າຮົບຢູ່ບ່ອນໃດກໍຕ້ອງຕັ້ງໜ້າເຮັດວຽກງານຂົນຂວາຍກໍ່ສ້າງຮາກຖານການເມືອງຢູ່ບ່ອນນັ້ນໃຫ້ດີ. ປັບປຸງອົງການປົກຄອງທ້ອງຖິ່ນ ແລະ ຕາໜ່າງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ຢູ່ຮາກຖານໃຫ້ໜັກແໜ້ນ ເຂັ້ມແຂງ; ເຕົ້າໂຮມຄວາມສາມັກຄີທົ່ວປວງຊົນລາວທັງຊາດ, ສຶກສາອົບຮົມປະຊາຊົນໃຫ້ຮັກເຊື້ອແພງຊາດ, ຮັກບ້ານເກີດເມືອງນອນ, ຕື່ນຕົວເຮັດພັນທະປົກປັກຮັກສາເຂດນ້ຳແດນດິນອັນຄົບຖ້ວນ ແລະ ພັດທະນາບ້ານຊ່ອງຂອງຕົນ, ປະເທດຊາດ ເຊິ່ງຕ້ອງຕັ້ງໜ້າປະຕິບັດທິດນຳ “ເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ”, ສ້າງພະລາທິການກັບທີ່ ເປັນເຈົ້າການຍົກລະດັບຊີວິດການເປັນຢູ່ຂອງກົມກອງຕົນໃຫ້ດີຂຶ້ນເປັນກ້າວໆ.

ນ້ຳໃຈວັນທີ 20 ມັງກອນ ໝັ້ນຍືນ!

**ໂດຍ: ສີວັນ ທອມໄຊຍະເດດ**




# ບໍລິສຸດ_ໃໝ່_ສົດ

‘ບໍລິສຸດ’, ‘ໃໝ່’ ແລະ ‘ສົດ’ ເປັນສາມຄຳທີ່ມີຄວາມໝາຍອ່າວໃກ້ຄຽງກັນ ແຕ່ກໍມີຄວາມຄື ແລະ ຕ່າງກັນ ດັ່ງນີ້:

‘ບໍລິສຸດ’ ເປັນຄຳວິເສດຈາກເຄົ້າປາລີ Parisuddhi ປະຣິສຸທທິ ແລ້ວແປງສຽງເປັນຄຳລາວເປັນ ‘ບໍລິສຸດ’ ໝາຍເຖິງ “ແທ້, ບໍ່ມີອັນໃດເຈືອປົນ, ລ້ວນໆ” ເຊັ່ນ:

- ລາວມັກດື່ມນ້ຳບໍລິສຸດ.
- ຄຳແທ່ງນີ້ເປັນຄຳບໍລິສຸດ 100%.
- ເດັກນ້ອຍປຽບເໝືອນຜ້າຂາວບໍລິສຸດ.

ພ້ອມກັນນັ້ນ ‘ບໍລິສຸດ’ ຍັງໝາຍເຖິງ “ປາສະຈາກມົນທິນ, ປາສະຈາກຄວາມຜິດ” ເຊັ່ນ:

- ນົງພາວ ເປັນຄຳທີ່ມັກປາກົດຢູ່ໃນບົດເລື່ອງທີ່ເປັນກາບກອນ ໝາຍເຖິງ ສາວບໍລິສຸດ.
- ພາຍຫຼັງຕັດສິນຄະດີ ລາວໄດ້ກາຍເປັນຜູ້ບໍລິສຸດ.

‘ໃໝ່’ ເປັນຄຳວິເສດ ໝາຍເຖິງ “ບໍ່ເກົ່າ” ເຊັ່ນ :

- ລາວມັກໃສ່ແຕ່ເສື້ອໃໝ່.
- ລົດຂອງລຸງຍັງໃໝ່ໆ.

ນອກຈາກນັ້ນ, ‘ໃໝ່’ ຍັງໝາຍເຖິງ “ຫາກໍມີ, ຫາກໍປາກົດ, ຫາກໍອອກ” ເຊັ່ນ

- ລາວໄປຊື້ໂທລະສັບມືຖືລຸ້ນໃໝ່.
- ຄຳດີມັກຟັງເພງທີ່ແຕ່ງອອກໃໝ່.

ພ້ອມກັນນີ້, ‘ໃໝ່’ ຍັງໝາຍເຖິງ “ບໍ່ແມ່ນຄົນເກົ່າ” ເຊັ່ນ

- ນ້າສາວຂອງລາວມີຜົວໃໝ່.
- ອ້າຍຄຳເຖິງເມຍລາວຈະເສຍຊີວິດໄປແລ້ວ ແຕ່ລາວກໍບໍ່ເອົາເມຍໃໝ່.

ບໍ່ພຽງເທົ່ານັ້ນ, ‘ໃໝ່’ ຍັງໝາຍເຖິງ “ອີກ, ຄືນອີກ” ເຊັ່ນ

- ທ້າວຄຳອ່ານບໍ່ຖືກ ຄູຈຶ່ງໃຫ້ລາວອ່ານໃໝ່.
- ຂ້ອຍຟັງເຈົ້າເວົ້າບໍ່ທັນ, ເວົ້າໄວໂພດ. ເວົ້າໃໝ່ອີກດູ໋.

‘ສົດ’ ເປັນຄຳວິເສດ ໝາຍເຖິງ “ທີ່ມີຄຸນນະພາບດີ ຍ້ອນໄດ້ມາໃໝ່ໆ” ເຊັ່ນ

- ລາບແຫຼວທີ່ພວກເຮົາເຮັດນີ້ ແມ່ນເຮັດມາຈາກປາຕອງສົດໆ.
- ຜັກສະຫຼັດສົດໆ ໄຂ່ສົດໆ ຊີ້ນສົດໆ ເອົາມາເຮັດຍຳສະຫຼັດແຊບອີ່ຫຼີ.

ນອກຈາກນັ້ນ, ‘ສົດ’ ຍັງໝາຍເຖິງ “ໃໝ່ຫຼ້າສຸດ, ທີ່ພວມດຳເນີນຢູ່”

- ລາວອ່ານຂ່າວສົດຈາກໂທລະສັບມືຖື.
- ເພິ່ນຖ່າຍທອດສົດລາຍການສົນທະນາບັນຫາພາສາລາວທາງເຟສບຸກ.



# ຂຽນຄຳລາວໃຫ້ຖືກ

#ຄູແສງ

| ຖືກ | ຜິດ |
|---|---|
| ພິທີກອນ | ນັກພິທີກອນ |
| ຈິດຕະກອນ | ນັກຈິດຕະກອນ |
| ວິສະວະກອນ | ນັກວິສະວະກອນ |
| ວິທະຍາກອນ | ນັກວິທະຍາກອນ |
| ສຳມະນາກອນ | ນັກສຳມະນາກອນ |




# ຕຳແລ້ວໜີ ເກີດແລ້ວຖິ້ມ

# ດົ້ນກົບເມກ




ສັນຍານລົບທີ່ບໍ່ຄວນຫາເຫດຜົນ ປະຕິເສດວ່າ: ພຶດຕິກຳຂອງຄົນໃນສັງຄົມ ມີທ່າອ່ຽງຖິ້ມປະຄວາມຮັບຜິດຊອບ ເຊິ່ງບອກເຖິງນິໄສຄົນປ່ຽນໄປຕາມກະແສໂລກ ຄືຢາກໄດ້-ຢາກເຮັດ ແຕ່ບໍ່ຢາກຮັບຜິດຊອບ ເຊັ່ນ: ພຶດຕິກຳຂັບຂີ່ລົດຍາມເມົາ-ຂັບຂີ່ໄວ ອາໄສວ່າມີເງິນໃນຖົງຫຼາຍ ໃຫ້ອຳນາດເງິນແກ້ບັນຫາໃຫ້ແທນ ແຕ່ມັນໄປຫຍຸ້ງ ຫຼື ທຳລາຍຊີວິດຄົນອື່ນ; ຕຳແລ້ວໜີ ຂັບຂີ່ຕອນເມົາ ຂາດຄວາມຮັບຜິດຊອບ ຂາດຈິດສຳນຶກມະນຸດສະທຳ ມີທັງຄົນໃນ ແລະ ຄົນນອກບ້ານໃກ້ ເຂົ້າມາພັກ-ອາໄສທ່ຽວຫຼິ້ນແບບເຫັນຄົນບ້ານອື່ນດ້ອຍກວ່າ...

ຂ່າວທີ່ປາກົດໃຫ້ສັງຄົມໄດ້ເຫັນຫຼາຍຄັ້ງ ເລື່ອງຕຳແລ້ວໜີ ແມ່ນປັດຄວາມຮັບຜິດຊອບ ເປັນພຶດຕິກຳ-ນິໄສ ບໍ່ເຄົາລົບລະບຽບ ເວົ້າໄດ້ວ່າ ຢາກເຮັດຕາມໃຈນິໄສເສລີມັນກະຍາກ. ຖ້າວ່າບ້ານເພິ່ນຕ່າງບ້ານໂຕ, ເວລາຄົນລາວເຮົາໄປບ້ານຄົນອື່ນ ມັກຈະສອນໃຫ້ເຄົາລົບຮີດຄອງ-ລະບຽບຕ່າງບ້ານ ແຕ່ເປັນຫຍັງ ບາງຄົນບ້ານອື່ນມາທ່ຽວບ້ານເຮົາ ຈຶ່ງບໍ່ຮູ້ສຶກເກງໃຈກັນແດ່? ໜ່ວຍງານກ່ຽວຂ້ອງຍິ່ງຈະຮູ້ດີ ວ່າແຕ່ລະບ້ານເມືອງຍ່ອມມີລະບຽບ-ກົດໝາຍ-ຮີດຄອງປະເພນີ ຖ້າເຮົາເຄົາລົບຄົນອື່ນເຂົາ ວ່າຜູ້ດີມີມາລະຍາດ ເລື່ອງເມົາແລ້ວຂັບ-ຕຳແລ້ວໜີແບບບໍ່ສົນໃຈນັ້ນ ສາກົນເຂົາຕຳນິ ເຖິງແມ່ນວ່າຜູ້ກ່ຽວຈະມີອຳນາດ ວາດສະໜາກໍຕາມ.

ເກີດແລ້ວຖິ້ມ ຜູ້ຂຽນເຄີຍເຫັນຂ່າວແຕ່ກ່ອນປະເທດໃກ້ຄຽງມີຫຼາຍ ປັດຈຸບັນນີ້ບ້ານເຮົາມາແຮງ ມັນຊີ້ບອກເຖິງຄົນອາໄສເຮືອນເຊົ່າເຂົ້າຊື້ ມີນິໄສ-ພຶດຕິກຳ ມັກສະບາຍ-ອິດສະຫຼະ ມັກຮັກແບບຂາດສະຕິ ຈົນພາໃຫ້ເກີດບັນຫາທ້ອງປຸ້ງຂຶ້ນມາ ເກີດແລ້ວກໍລັກເອົາໄປຖິ້ມ-ເອົາໄປປະໄວ້ຕາມເຂດ ສະຖານທີ່ໃຫ້ຄົນອື່ນພົບເຫັນນຳໄປລ້ຽງ ຖ້າຄົນບູຮານກໍເວົ້າວ່າລູກມານທາງ ເຊິ່ງປາກົດການແບບນີ້ ຖ້າມີທ່າອ່ຽງສູງຂຶ້ນ ມັນກໍຮຽກຮ້ອງຫາສິນທຳ-ຮີດຄອງປະເພນີ-ລະບຽບ-ກົດໝາຍ ອາດບໍ່ສາມາດຄຸມກາຍໄດ້ ແຕ່ຖ້າມີສິນທຳ-ຄຸນນະທຳ ຢ່າງໜ້ອຍກໍມີມະນຸດສະທຳຮັບຜິດຊອບໃນສິ່ງທີ່ເກີດຂຶ້ນ ຫຼື ກ່ອນເຮັດສິ່ງໃດລົງໄປ ກໍຄິດເຖິງຜົນທີ່ຕາມມາດີກວ່າແກ້ໄຂພາຍຫຼັງ.

ເລື່ອງຕຳແລ້ວໜີ-ເກີດແລ້ວຖິ້ມ ມັນເປັນສິ່ງທີ່ໜ້າຄິດວ່າ: ແກ້ຕົ້ນເຫດໄດ້ບໍ່? ເຮົາສ້າງລະບຽບກົດເກນ ຫຼື ເຜີຍແຜ່ແນວທາງທີ່ມັນເປັນນະໂຍບາຍລະບຽບສັງຄົມໃຫ້ເຂົາຮູ້ ເພາະບ້ານເມືອງໃຜກໍມີຂື່ມີແປ ບໍ່ແມ່ນເຮັດຕາມໃຈຕາມນິໄສ ແຕ່ເສຍຫາຍຄົນອື່ນບໍ່?.

# ວິທີເຮັດວຽກ




## ພາກທີ 4
## ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)

ຕຳນິຕົນເອງ ແປວ່າຍົກເອົາຂໍ້ດີ ແລະ ຂໍ້ບົກພ່ອງຂອງຕົນເອງຂຶ້ນມາເວົ້າ ການຕຳນິຕົນເອງ ແລະ ຕຳນິກັນ ຕ້ອງເດີນຄຽງຄູ່ກັນ, ຈຸດປະສົງຂອງມັນ ແມ່ນໃຫ້ທຸກຄົນຮຽນເອົາຂໍ້ດີຂອງກັນແລະ ຊ່ວຍເຫຼືອກັນແກ້ໄຂປ່ຽນແປງຂໍ້ບົກພ່ອງ. ສຳລັບພັກຕ້ອງປະຕິບັດຄືດັ່ງລຸ່ມນີ້:

1. ຕ້ອງເຂັ້ມງວດກວດກາທ້ອງຖິ່ນຕ່າງໆໃຫ້ປະຕິບັດຕາມມະຕິຕົກລົງຂອງພັກຢ່າງເຄັ່ງຄັດ, ຕ້ອງເດັດດ່ຽວຕ້ານຢັນນິດໄສທີ່ຕົກລົງແນວໜຶ່ງ ແລ້ວໄປເຮັດແນວໜຶ່ງ.

2. ບ່ອນໃດຜິດພະຍາດ, ຜູ້ໃດຕິພະຍາດຕ້ອງຟ້າວແກ້ໄຂ, ຕ້ອງເດັດດ່ຽວຕ້ານຢັນນິດໄສຈົ່ງຈຽມ ແລະ ເຊື່ອງອຳເອົາກັນ, ຕ້ານຢັນນິດໄສ "ຕໍ່ໜ້າຈົ່ງຈຽມລັບຫຼັງດູຖູກ" ຕຳນິຕ້ອງໃຫ້ຈະແຈ້ງ ຈິງໃຈ ກົງໄປກົງມາ ສັດຊື່ ຈຸດປະສົງຂອງການຕຳນິ ແມ່ນເພື່ອແກ້ໄຂປ່ຽນແປງ, ບໍ່ແມ່ນເພື່ອໂຈມຕີກັນ, ແມ່ນເພື່ອຊ່ວຍເຫຼືອກັນໃຫ້ກ້າວໜ້າ, ບໍ່ແມ່ນເຮັດໃຫ້ເພື່ອນສະຫາຍເຮົາອິດຫິນຍາກ ແລະ ທຸກໃຈ.

3. ຕ້ອງປະຕິບັດລະບຽບວິໄນຢ່າງເດັດຂາດ, ໝາຍຄວາມວ່າເອກະຊົນຕ້ອງຂຶ້ນກັບອົງການຈັດຕັ້ງ ສ່ວນໜ້ອຍຕ້ອງຂຶ້ນກັບສ່ວນຫຼາຍ ຊັ້ນຕ່ຳຕ້ອງຂຶ້ນກັບຊັ້ນສູງ ທ້ອງຖິ່ນຕ້ອງຂຶ້ນກັບສູນກາງ.

4. ຕ້ອງທວງໃຫ້ສະມາຊິກແຕ່ລະຄົນ, ເປັນຕົ້ນພະນັກງານຕ້ອງຈິງໃຈຕໍ່ຕົນເອງ, ຕ້ອງແກ້ໄຂດັດແປງຂໍ້ບົກພ່ອງຂອງຕົນເອງ, ຕ້ອງຍົກຜົນປະໂຫຍດຂອງພັກ ແລະ ຂອງຊາດຂຶ້ນສູງກວ່າໝົດ, ຕ້ອງເດັດດ່ຽວຕ້ານຢັນພະຍາດ ອວດຕົວ ອວດວ່າຕົນເກັ່ງ ວ່າຕົວດີ ຂີ້ອິ່ງສະຫາວ ເປັນແຕ່ປາກ ຊອກຫາແຕ່ປະໂຫຍດສ່ວນຕົວ. ຕ້ອງປະຕິບັດຄຳຂວັນທີ່ວ່າ: "ເສຍສະຫຼະປະໂຫຍດສ່ວນຕົວເພື່ອສ່ວນລວມ" ແລະ "ໝັ່ນປະຢັດ ສັດທ່ຽງ" ນັ້ນຢ່າງແທ້ຈິງ.

ອ່ານຕໍ່ສະບັບໜ້າ...

# ບັ້ນຮົບປ້ອງກັນທີ່ໝັ້ນ

# ໂດຍ: ຜູ້ອື່ນ

ເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວ ອັນເປັນປະຫວັດສາດຂອງຊາດ ຄົບຮອບ 75 ປີ (20.1.1949-20.1.2024) ທີ່ຈະໝູນວຽນມາບັນຈົບໃນມໍ່ໆນີ້, ໜັງສືພິມຜູ້ແທນປະຊາຊົນ ມີຂໍ້ມູນເພີ່ມເຕີມ ກ່ຽວກັບບັ້ນຮົບປ້ອງກັນເຂດທີ່ໝັ້ນສອງແຂວງເຕົ້າໂຮມ (ຫົວພັນ ແລະ ຜົ້ງສາລີ) ມານຳສະເໜີຕໍ່ບັນດາທ່ານຜູ້ອ່ານ.

ໃນສັນຍາເຊີແນວ ປີ 1945 ໄດ້ຮັບຮອງວ່າ "ຝ່າຍປະເທດລາວ" ແມ່ນກຳລັງການເມືອງເອກະລາດ ຖືກກົດໝາຍ ແລະມີທະຫານ ມີເຂດເຕົ້າໂຮມຂອງຕົນຢູ່ສອງແຂວງ ຄື ຫົວພັນ ແລະ ຜົ້ງສາລີ; ຈາກນັ້ນ, ບັນດາທະຫານຝ່າຍປະເທດລາວທີ່ແຈກຢາຍຢູ່ແຕ່ລະເຂດໃນທົ່ວປະເທດ ໄດ້ເລີ່ມເຄື່ອນທັບ ແຕ່ເດືອນສິງຫາປີ 1954 ຂຶ້ນໄປເຕົ້າໂຮມຢູ່ສອງແຂວງ ຄື ຫົວພັນ ແລະ ຜົ້ງສາລີ ຈົນຮອດເດືອນພະຈິກ 1954 ບັນດາກົມກອງ ໄດ້ໄປຮອດສອງແຂວງເຕົ້າໂຮມ. ລັດຖະບານວຽງຈັນໄດ້ລະເມີດຂໍ້ກຳນົດຂອງສັນຍາເຊີແນວປີ 1954 ຢ່າງເປີດແປນ ໃນເດືອນມີນາປີ 1955 ພວກຈັກກະພັດອາເມລິກາ ໄດ້ລະດົມກຳລັງທະຫານຫຸ່ນຝ່າຍວຽງຈັນ 10 ກອງພັນ (2/3 ຂອງກຳລັງຫຼວງ) ປະກອບອາວຸດທີ່ທັນສະໄໝ ເປີດບັ້ນບຸກໂຈມຕີເຂົ້າສອງແຂວງເຕົ້າໂຮມ, 11 ກອງຮ້ອຍທະຫານທີມ (ຄອມມັງໂດ) ພ້ອມກັບໜ່ວຍກອງປຸ້ນທີ່ເປັນຄົນໃນທ້ອງຖິ່ນພາຍໃຕ້ການບັນຊາຂອງ "ຄະນະບັນຊາເຄື່ອນທັບເຂດຊຳເໜືອ" ໄດ້ດຳເນີນການເຊື່ອມກຳລັງ ຍຶດບຸກຕີເຂົ້າແຂວງຫົວພັນຢ່າງບັງອາດ ແລະ ຕັ້ງທັບຢ່າງຜິດກົດໝາຍຢູ່ 13 ຈຸດທີ່ສຳຄັນ. ນອກນັ້ນ, ພວກເຂົາຍັງສົ່ງພວກນັກສືບໃຕ້ດິນ, ພວກປຸ້ນແຊກຊຶມເຂົ້າ 131 ບ້ານ ໃນຈຳນວນທັງໝົດ 974 ບ້ານ ຂອງແຂວງຫົວພັນ ສ່ວນກຳລັງຂອງຝ່າຍເຮົາມີ 3 ກອງພັນນ້ອຍ, 5 ກອງຮ້ອຍເອກະລາດ, 4 ກອງຮ້ອຍທະຫານທ້ອງຖິ່ນ ແລະ 4 ໝວດຂອງກອງປັດໄຈ, ນອກນັ້ນ ຍັງມີທະຫານລາດກອງຫຼອນເຂົ້າຮ່ວມ ຈຳນວນ 1.000 ກວ່າຄົນ.

ຢູ່ແຂວງຜົ້ງສາລີ ສັດຕູໄດ້ເຕົ້າໂຮມເອົາ 3 ກອງພັນທະຫານຫຼວງ, 5 ກອງຮ້ອຍທະຫານທີມ (ຄອມມັງໂດ) ແລະພວກປຸ້ນໃນທ້ອງຖິ່ນ 300 ຄົນ ພ້ອມກັບພວກກົກມິນຕັງ 300 ຄົນ (ທະຫານເສດເຫຼືອຂອງຈຽງໄຄເຊັກ) ໂດຍແມ່ນກົມເສນາທິການ ທະຫານຝ່າຍຂວາ ເປັນຜູ້ບັນຊາໂດຍກົງ ເພື່ອກຽມການຊ່ວຍໜູນ ສັດຕູຍັງໄດ້ຈັດວາງສອງກອງພັນນ້ອຍຕັ້ງທັບຢູ່ບ້ານຫາດນາງ ແລະ ສົບຈາຍ (ຫຼວງພະບາງ) ສ່ວນຝ່າຍເຮົາ ມີກຳລັງ 1 ກອງພັນນ້ອຍທະຫານຫຼວງ, 2 ກອງພັນນ້ອຍທະຫານແຂວງ, ກຳລັງໄຟຊ່ວຍໜູນ 1 ກອງຮ້ອຍ, ທະຫານທ້ອງຖິ່ນ 5 ເມືອງມີ 5 ໝວດ ລວມທັງໝົດ 1.000 ກວ່າຄົນເຂົ້າຮ່ວມສູ້ຮົບ.

ການບຸກໂຈມຕີບຽດຍຶດຂອງພວກສັດຕູໃນແຕ່ລະຄັ້ງ ລ້ວນແຕ່ຖືກກອງທັບ ແລະ ປະຊາຊົນເຮົາຢູ່ 2 ແຂວງ ຕີຕ້ານຄືນຢ່າງອົງອາດກ້າຫານ ເຮັດໃຫ້ກຳລັງຂອງສັດຕູ ທີ່ມີກຳລັງພົນ, ພາຫະນະເຕັກນິກທີ່ເໜືອກວ່າພວກເຮົາ ຖືກດັບສູນ ແລະຖືກທຳລາຍຢ່າງໜັກ ໃນທີ່ສຸດພວກເຮົາກໍຕີຕ້ານ ຍຸດທະສາດບຸກລຸກບຽດຍຶດເອົາສອງແຂວງເຕົ້າໂຮມຂອງພວກຈັກກະພັດອາເມລິກາແລະລູກມືຂາຍຊາດໃຫ້ປະລາໄຊຢ່າງເຈັບແສບ.

ສະຫຼຸບແລ້ວ ນັບແຕ່ເດືອນຕຸລາປີ 1954 ເຖິງເດືອນສິງຫາ 1956 ທະຫານຝ່າຍຂວາວຽງຈັນ ໄດ້ດຳເນີນການບຸກໂຈມຕີທັງໃຫຍ່ ແລະ ນ້ອຍເຂົ້າແຕ່ລະເຂດຂອງສອງແຂວງເຖິງ 685 ຄັ້ງ ການບຸກໂຈມຕີຂອງພວກເຂົາສ່ວນໃຫຍ່ ໄດ້ຖືກສະກັດກັ້ນ ແລະ ຕີຖອຍ, ພວກເຂົາຖືກຂ້າຕາຍແລະບາດເຈັບ 5.000 ກວ່າຄົນ, ພວກເຮົາສາມາດປົກປັກຮັກສາເຂດເຕົ້າໂຮມສອງແຂວງໄວ້ໄດ້ ແລະສ້າງໃຫ້ກາຍເປັນເຂດທີ່ໝັ້ນນັບມື້ນັບເຂັ້ມແຂງ ຂອງການປະຕິວັດໃນທົ່ວປະເທດ.

ຍ້ອນພວກເຂົາຖືກປະລາໄຊຢ່າງໜັກໜ່ວງ ໃນການບຸກໂຈມຕີທາງດ້ານການທະຫານເຂົ້າສອງແຂວງເຕົ້າໂຮມ ຍ້ອນຖືກປະຊາຊົນທົ່ວປະເທດຄັດຄ້ານ ແລະ ລູກມືຊຸດທຳອິດຂອງອາເມລິກາ ຈຳຕ້ອງລາອອກຈາກຕຳແໜ່ງ ແລະ ຈັດຕັ້ງລັດຖະບານຊຸດໃໝ່ຂຶ້ນ ນຳໄປສູ່ການເຈລະຈາສ້າງຄວາມປອງດອງຊາດ ໃນວັນທີ 27/11/1957 ລັດຖະບານປະສົມໄດ້ຮັບການສ້າງຕັ້ງຂຶ້ນ (ລວມລາວຄັ້ງທີ 1).

ຮ່ວມກັບ
ກົມສື່ມວນຊົນ
ຄະນະເລຂາທິການ ສະພາແຫ່ງຊາດ
ສະຖານີ ໂທລະພາບ
ປ້ອງກັນຄວາມສະຫງົບ (LAO PSTV)
ສະເໜີລາຍການ
"ກົດໝາຍເພື່ອປະຊາຊົນ"
ອອກອາກາດທາງສະຖານີ ໂທລະພາບ
ປ້ອງກັນຄວາມສະຫງົບ (LAO PSTV)
ທຸກໆ ວັນອາທິດ ເວລາ 7:30 - 8:00 ໂມງ
ແລະ ທຸກໆ ວັນພະຫັດ ເວລາ 21:00 - 21:30 ໂມງ
ເລີ່ມອອກອາກາດ ວັນທີ 12 ມິຖຸນາ 2022 ນີ້ ເປັນຕົ້ນໄປ

# 4 ສະໝຸນໄພ ຊ່ວຍຕ້ານໂຣກຊຶມເສົ້າ



## ສຸກສະບາຍທາຍໂລດ

ໂດຍ: ທິວກະທິ



ໂຣກຊຶມເສົ້າ ກຳລັງເປັນບັນຫາສຳຄັນໃນສັງຄົມຍຸກປັດຈຸບັນຫຼາຍຂຶ້ນ ແລະ ເພີ່ມຄວາມຮຸນແຮງຂຶ້ນໄປເລື້ອຍໆ; ສະນັ້ນ, ຜູ້ຂຽນຈຶ່ງໄດ້ແນະນຳ 4 ສະໝຸນໄພ ທີ່ສາມາດຊ່ວຍຕ້ານໂຣກຊຶມເສົ້າ ແລະຍັງສາມາດຫາໄດ້ງ່າຍໆຄື:

**1. ຂີ້ໝິ້ນ:** ມີການສຶກສາໃນຄລີນິກທີ່ມີຜູ້ເປັນໂຣກຊຶມເສົ້າ ເຊິ່ງໄດ້ມີການໃຊ້ສານສະກັດຈາກຂີ້ໝິ້ນ 500 ມກ ຫຼັງຮັບປະທານອາຫານເຊົ້າ ແລະແລງ,ຢາຕ້ານໂຣກຊຶມເສົ້າ (Fluoxetine 20 mg) ເປັນເວລາ 6 ອາທິດ ສຳລັບເປີເຊັນໃນການຕອບສະໜອງຜົນການການຮັກສາຂອງຜູ້ປ່ວຍຢາຕ້ານໂຣກຊຶມເສົ້າ 64.7% ສານສະກັດຂີ້ໝິ້ນ 62.5% ແລະ ເມື່ອໃຊ້ຮ່ວມກັນທັງຢາຕ້ານໂຣກຊຶມເສົ້າ ແລະ ສານສະກັດຂີ້ໝິ້ນ ຈະໃຫ້ຜົນຕອບສະໜອງ 77.8%

**2. ຜັກໜອກ:** ມີການໃຊ້ຜັກໜອກມາເຮັດເປັນຢາມາແຕ່ສະໄໝບູຮານ ເຊິ່ງຜັກໜອກສາມາດຊ່ວຍບັນເທົາອາການໂຣກວິຕົກກັງວົນຈາກການສຶກສາໃຊ້ສານສະກັດຜັກໜອກ 500 ມກ ມື້ລະ 2 ເທື່ອຫຼັງອາຫານ ໃນຜູ້ປ່ວຍທີ່ໄດ້ຮັບການວິນິໄສວ່າເປັນໂຣກວິຕົກກັງວົນອາຍຸຕັ້ງແຕ່ 18 ປີຂຶ້ນໄປ ຈຳນວນ 33 ຄົນພົບວ່າເລີ່ມເຫັນຜົນການຮັກສາທີ່ 1 ເດືອນແລະເຫັນຜົນຊັດເຈນຂຶ້ນທີ່ 2 ເດືອນ. ຈາກການສຶກສາດັ່ງກ່າວ, ຈະເຫັນໄດ້ວ່າສານສະກັດຂອງຜັກໜອກສາມາດຊ່ວຍຫຼຸດຄວາມກັງວົນ, ຄວາມຄຽດ ແລະ ຊ່ວຍຫຼຸດອາການຂອງໂຣກຊຶມເສົ້າໄດ້ເຮັດໃຫ້ຄວາມເຕັມໃຈທີ່ຈະປັບຕົວ ແລະ ຮຽນຮູ້ດີຂຶ້ນ. ດັ່ງນັ້ນ, ຜັກໜອກຈຶ່ງມີສັບພະຄຸນທີ່ຈະນຳມາໃຊ້ໃນຜູ້ປ່ວຍໂຣກວິຕົກກັງວົນ.

**3. ນ້ຳມັນຈາກລຳຕົ້ນຂອງເຂົ້າ ແລະ ຫົ່ນເຂົ້າ:** ນ້ຳມັນຈາກລຳຕົ້ນຂອງເຂົ້າ ແລະ ຫົ່ນເຂົ້າ ມີສານສຳຄັນທີ່ຊ່ວຍເຮັດໃຫ້ນອນຫຼັບໄດ້ງ່າຍດ້ວຍສານ GABA (Gamma-aminobutyric acid) ເປັນສານສື່ປະສາດພົບຢູ່ໃນລະບົບປະສາດສ່ວນກາງຄືສະໝອງ ແລະ ໄຂສັນຫຼັງ ມີປະສິດທິພາບທີ່ຊ່ວຍໃຫ້ຮ່າງກາຍຜ່ອນຄາຍ ບໍ່ມີຄວາມກັງວົນ ແລະ ເຮັດໃຫ້ຫຼັບສະບາຍ ເຊິ່ງຢານອນຫຼັບສ່ວນໃຫຍ່ທີ່ໃຊ້ໃນປັດຈຸບັນກໍອອກລິດໂດຍການຈັບຕົວຮັບ GABA ແລະ ສານ N-Acetyl serotonin ເປັນສານທີ່ພົບເຫັນຕາມທຳມະຊາດຂອງນ້ຳມັນລຳຕົ້ນເຂົ້າ ເປັນສານຕັ້ງຕົ້ນໃນການສ້າງສານເມລາໂທນິນ(melatonin) ເຊິ່ງມີໜ້າທີ່ໃນການຄວບຄຸມວົງຈອນການນອນຫຼັບຂອງຄົນ ມີສ່ວນຊ່ວຍໃນການຄາຍຄວາມຄຽດ, ຄວາມກັງວົນ, ຕ້ານການຊຶມເສົ້າ, ຕ້ານອະນຸມູນອິດສະຫຼະ, ປົກປ້ອງສະໝອງ ແລະ ປົກປ້ອງເຊວຮັບແສງຈາກຈໍປະສາດຕາອີກດ້ວຍ.

**4. ໝາກອຶ:** ມີການສຶກສາພົບວ່າ ໝາກອຶ ຊ່ວຍບັນເທົາອາການຊຶມເສົ້າໄດ້ ໂດຍສັງເກດພຶດຕິກຳຂອງໜູທີ່ຖືກບັງຄັບໃຫ້ລອຍນ້ຳ ເຮັດໃຫ້ໜູທົດລອງເກີດພາວະຊຶມເສົ້າ ເຊິ່ງໜູຈະມີພຶດຕິກຳຢຸດເໜັງຕີງ (ບໍ່ລອຍນ້ຳ) ຄ້າຍວ່າຢາກຕາຍ ແຕ່ການໃຫ້ໝາກອຶ ແລະ ສານເບຕ້າແຄໂຣທິນ ມີຜົນທີ່ເຮັດໃຫ້ໄລະຍະເວລາການຢຸດເໜັງຕີງຫຼຸດລົງ ແລະ ຍັງມີຜົນເພີ່ມລະດັບເຊໂຣໂທນິນ ແລະ ນໍອີພິເນຟຣິນ ເປັນສານສື່ປະສາດໃນສະໝອງ (norepinephrine: NE) ເຊິ່ງຈະຫຼຸດລົງເນື່ອງຈາກພາວະຊຶມເສົ້າກັບມາສູ່ລະດັບປົກກະຕິ.

**ແຫຼ່ງຂໍ້ມູນ:** https://www.phakhaolao.la




## 20 ມັງກອນໝັ້ນຍືນ

**# ສາວຄູ ວັງຄຳກລິ່ນ**

❈ 20 ມັງກອນ ຮຸ່ງແຈ້ງ
ນັກຮົບປະຊາຊົນລາວ
ໃຕ້ການນຳພັກວາງໄວ້
1949 ກຳເນີດຂຶ້ນ

ເໝືອນແສງສ່ອງໂລກາ
ເບີກເບີຍບານຍິ້ມ
ແນວທາງອັນປະເສີດ
ວັນຕັ້ງກໍ່ມາ ນັ້ນນາ!

❈ ປະຊາລາວຫວນຮັບຮູ້
ຄາວມີເສິກສົງຄາມ
ກອງທັບລາວອາດຫານກ້າ
ຍາດເອົາໄຊຊະນະມອບໃຫ້

ຈາລຶກຜົນງານ
ສັດຕູຕີເມືອງບ້ານ
ສາມັກຄີຂັບໄລ່
ປະຊາເຊື້ອຊື່ນຊົມ

❈ ຄາວນີ້ ຊາດລາວຫຼຸດລອດພົ້ນ
ແຕ່ກອງທັບຍັງຂະຫຍາຍ
ຖືເອົາການຝຶກຊ້ອມ
ເພີ່ມທະວີປົກປ້ອງ ເຮັດໜ້າທີ່ຢູ່ເລື້ອຍ

ການກິດຂີ່ຂອງສັດຕູ
ທົ່ວດິນແດນດ້າວ
ປະຈັນບານມິຢຸດຢ່ອນ
ພັດທະນາຂຶ້ນຊູ່ວັນ

❈ ຂໍຊົມເຊີຍ ທະຫານລາວເກັ່ງກ້າ
ປົກປ້ອງດິນແດນລາວ
ທຸກຫີນແຫ່ງແດນລາວນີ້
ລາວ ບໍ່ຄຽດຂື່ນແຄ້ນ

ໂຮມຮ່ວມແຮງກັນ
ໄພ່ປະຊາສຸກລົ້ນ
ມິມີໃຜບຽນບຽດ
ຄືກີ້ເກົ່າຫຼັງ ແລ້ວໃດ

❈ 20 ມັງກອນ ຂໍຈົ່ງໃຫ້
ເປັນດັ່ງດາວດວງຈັນ
ທະຫານລາວທົ່ວເຂດແຄ້ວນ
ສົມປະສົງມາດມຸ້ງ

ຍືນຍົງຍາວນານ
ຄູ່ຄຽງເວຫາກວ້າງ
ສຳເລັດງານໝາຍມຸ່ງ
ແຮງກ້າແກ່ນແຂງ ນັ້ນທ້ອນ

❈ 75 ປີ ຂໍສົ່ງກອນສອດຫ້ອຍ
ກອງທັບປະຊາຊົນລາວ
ເປັນຮົ້ວໜາລຽນລ້ອມ
ຄົງສະຖຽນແກ່ນໝັ້ນ

ພອນໄຊສົ່ງໄປຍັງ
ຍື່ນຍໍທະຫານກ້າ
ເມືອງລາວອັນເຮືອງຮຸ່ງ
ເລິງເລື້ອຍຕະຫຼອດໄປ ທ່ານເອີຍ!



## ຟ້າສາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

❈ **ຊົມເຊີຍ!** ວັນສ້າງຕັ້ງກອງທັບປະຊາຊົນລາວ **20 ມັງກອນ** ຄົບຮອບ **75 ປີ**ຢ່າງສຸດໃຈ ເນື່ອງໃນໂອກາດນີ້ ຂໍ**ສົ່ງພອນໄຊ** ໄປຍັງນາຍທະຫານ ທົ່ວທານີແຄວ້ນ ທຸກເຂດແດນຊົງຄ້າຍ **ສຸກສະບາຍທຸກໝູ່ເຫຼົ່າ** ຢ່າໄດ້ເຫງົາຫງ່ອມເສົ້າ ແຂງແຮງກ້າຄູ່ສູ້ຄົ້ນ ຂໍໃຫ້ລາບຍົດລົ້ນ ໂດຍດັ່ງສົມປະສົງ **ເປັນນາຍພັນນາຍພົນ** ໜ້າທີ່ການງານກ້າວ ຜູ້ທີ່ເປັນ**ນາຍຮ້ອຍ ນາຍສິບຂໍໃຫ້ເລື່ອນ** ຕາມໃຈຫວັງມາດມຸ້ງ ໂດຍດ້ານດັ່ງກັບ **ທ່ານເອີຍ!**

❈ ກອງປະຊຸມ ສະໄໝສາມັນ**ເທື່ອທີ 6** ຂອງບັນດາ**ເຂດ**ເລືອກຕັ້ງ**ທົ່ວປະເທດ** ພວມຊຸ້ນຊ້ຽວ ແລະ ຄຶກຄື້ນ ເລີ່ງຫຼາຍເຂດ (ແຂວງ) ນັ້ນ ກໍໄດ້ຈັດລົງດ້ວຍຜົນສຳເລັດອັນຈົບງາມ ຕາມວາລະ ແລະ ຄາດວ່າອີກບໍ່ດົນກໍຄົງສຳເລັດຕາມແຜນ ແລ້ວເຂົ້າສູ່ວາລະຕໍ່ໄປ ກະກຽມເຄື່ອນໄຫວເຜີຍແຜ່ຜົນສຳເລັດ ກໍຄືຜົນງານທີ່ຍາດມາໄດ້ໃນ 6 ເດືອນຜ່ານມາໃຫ້ພໍ່ແມ່ປະຊາຊົນລາວບັນດາເຜົ່າໄດ້ຮັບຮູ້ຢ່າງທົ່ວເຖິງ.

## 🤗 ຊອບຍິ້ມ 🤗

**# ແອ່ບຕຸ້ງ**

### ເລື່ອງ: ເມຍຟັງຄວາມ

ຜົວ-ເມຍ ຄູ່ໜຶ່ງຜິດກັນ ຜູ້ເປັນເມຍຕົບຜົວ ປ໊ອະບາດໜຶ່ງ

**ຜົວ:** ເກັ່ງແທ້ຕົບອີກບາດໜຶ່ງແມະ

**ຜູ້ເປັນເມຍ:** ຈຶ່ງຕົບປ໊ອະ ເຂົ້າກົກຫູອີກບາດໜຶ່ງ

**ຜົວ:** ດີແຕ່ຍັງຟັງຄວາມ ບໍ່ຊັ້ນມຶງເຈັບໂຕແທ້!!!!



### ຄະຕິເຕືອນໃຈ

**# ດອກຫຍ້າ**

ຖ້າຕິດກະດຸມເສື້ອເມັດທຳອິດຜິດພາດ
ເມັດຕໍ່ໄປ ກໍຜິດໄປຕາມໆກັນ
ຫາກບໍ່ແກ້ໄຂທີ່ຈຸດເລີ່ມ

ລັດຖະສະພາຕ່າງປະເທດ

# ຈີນ ເລີ່ມບັງຄັບໃຊ້ “ກົດໝາຍການສຶກສາຄວາມຮັກຊາດ”

*ກົດໝາຍວ່າດ້ວຍການສຶກສາຄວາມຮັກຊາດ ສະບັບໃໝ່ຂອງຈີນ ມີຜົນບັງຄັບໃຊ້ຢ່າງເປັນທາງການໃນວັນທີ 01 ມັງກອນ 2024.*

ສຳນັກຂ່າວຊິນຮວາ ລາຍງານຈາກນະຄອນຫຼວງປັກກິ່ງ, ສປ ຈີນ ເມື່ອວັນທີ 01 ມັງກອນ 2024 ວ່າ: ເນື້ອໃນສຳຄັນຂອງກົດໝາຍສະບັບນີ້ກຳນົດວ່າ ການສຶກສາກ່ຽວກັບຄວາມຮັກຊາດຈະກວມເອົາຫຼາຍດ້ານ ເປັນຕົ້ນ ອຸດົມການ ແລະ ການເມືອງ, ປະຫວັດສາດ ແລະ ວັດທະນະທຳ, ສັນຍະລັກປະຈຳຊາດ, ຄວາມງົດງາມຂອງມາຕຸພູມ, ລັດຖະທຳມະນູນ ແລະ ກົດໝາຍ, ຄວາມເປັນເອກະພາບຂອງຊາດ ແລະ ຄວາມສາມັກຄີລະຫວ່າງຊົນເຜົ່າ, ຄວາມໝັ້ນຄົງຂອງຊາດ ແລະ ການປ້ອງກັນປະເທດລວມເຖິງການກະທຳຂອງວິລະຊົນ ແລະ ບຸກຄົນແບບຢ່າງ.

ກົດໝາຍວ່າດ້ວຍການສຶກສາຄວາມຮັກຊາດ ກຳນົດວ່າ ກຸ່ມເປົ້າໝາຍຂອງການສຶກສາຄວາມຮັກຊາດໄດ້ແກ່ພົນລະເມືອງທຸກຄົນ ແລະ ເນັ້ນໜັກເຖິງການໃຫ້ການສຶກສາເລື່ອງຄວາມຮັກຊາດໃນກຸ່ມເຍົາວະຊົນ ແລະ ເດັກນ້ອຍ ທັງໃນໂຮງຮຽນ ແລະ ຢູ່ເຮືອນ; ໃນຂະນະດຽວກັນ, ກົດໝາຍສະບັບນີ້ກຳນົດໃຫ້ນຳໃຊ້ຊັບພະຍາກອນທຸກປະເພດຢ່າງເຕັມທີ່ເພື່ອດຳເນີນວຽກງານດ້ານການສຶກສາຄວາມຮັກຊາດ ບໍ່ວ່າຈະເປັນຊັບພະຍາກອນທີ່ກ່ຽວຂ້ອງກັບມໍລະດົກຂອງພັກກອມມູນິດຈີນ, ມໍລະດົກທາງວັດທະນະທຳ, ພື້ນຖານການສຶກສາກ່ຽວກັບຄວາມຮັກຊາດ ແລະ ສະຖານທີ່ທາງວັດທະນະທຳທີ່ຫຼາກຫຼາຍ.



# ຫຼາຍປະເທດ EU ສະໜັບສະໜູນກົດໝາຍຄວບຄຸມ “ຂີ້ເຫຍື້ອຈາກການຫຸ້ມຫໍ່”




*ສະມາຊິກຂອງສະຫະພາບເອີຣົບ (ອີຢູ) ຫຼາຍປະເທດສະໜັບສະໜູນກົດໝາຍໃໝ່ທີ່ຈະຫຼຸດຜ່ອນປະລິມານຂີ້ເຫຍື້ອຈາກການຫຸ້ມຫໍ່ (packaging waste), ແຕ່ເຫັນດີໃນການກຳນົດຂໍ້ຍົກເວັ້ນສຳລັບບາງຂະແໜງການ.*

ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງບຣຸກແຊນ, ປະເທດແບນຊິກ ເມື່ອວັນທີ 20 ທັນວາ 2023 ວ່າ: ຄະນະກຳມະການເອີຣົບ ຫຼື ອີຊີ (European Commission-EC) ສະເໜີກົດໝາຍສະບັບນີ້ເມື່ອປີ 2022 ໃນຄວາມພະຍາຍາມທີ່ຈະຄວບຄຸມປະລິມານສິ່ງເສດເຫຼືອຈາກການຫຸ້ມຫໍ່ ຫຼັງຈາກຂີ້ເຫຍື້ອປະເພດນີ້ໄດ້ເພີ່ມຂຶ້ນໃນອີຢູຫຼາຍກວ່າ 20 ສ່ວນຮ້ອຍ ໃນໄລຍະ 10 ປີທີ່ຜ່ານມາ ຍ້ອນການຊື້ເຄື່ອງອອນລາຍ ແລະ ພຶດຕິກຳການບໍລິໂພກ “ອາຫານພ້ອມຮັບປະທານ” (grab and go).

ເຖິງແມ່ນວ່າບັນດາປະເທດໃນອີຢູສະໜັບສະໜູນເປົ້າໝາຍທີ່ສຳຄັນໃນກົດໝາຍໃໝ່ນີ້ ບໍ່ວ່າຈະເປັນການຫຸ້ມຫໍ່ທັງໝົດຈະຕ້ອງຖືກອອກແບບໃຫ້ສາມາດນຳມາໃຊ້ຄືນໄດ້ ພາຍໃນປີ 2030 ລວມເຖິງການຢຸດນຳໃຊ້ສິ່ງຂອງປລາສຕິກທີ່ໃຊ້ເທື່ອດຽວ ເຊັ່ນ: ຖົງບາງໆສຳລັບໃສ່ຜັກ ແລະ ໝາກໄມ້, ກະຕຸກຢາສະຜົມຂະໜາດນ້ອຍເຊັ່ນດຽວກັບຈານ, ຈອກ ແລະ ກ່ອງແບບໃຊ້ແລ້ວຖິ້ມ; ແຕ່ພວກເຂົາສະເໜີວ່າ ທຸກປະເທດຄວນສາມາດກຳນົດຂໍ້ຍົກເວັ້ນສຳລັບຜະລິດຕະພັນບາງຢ່າງເຊັ່ນ: ຜັກ ແລະ ໝາກໄມ້ອິນຊີ.

# ກູບາ ຊາດທີສອງໃນອາເມລິກາລາຕິນ ຜ່ານກົດໝາຍກາລຸນຍະຄາດ

ສະພາແຫ່ງຊາດກູບາ ມີມະຕິເມື່ອວັນສຸກທີ 22 ທັນວາ 2023 ຮັບຮອງກົດໝາຍວ່າດ້ວຍການກາລຸນຍະຄາດ (euthanasia - ການຊ່ວຍເຮັດໃຫ້ຄົນເຈັບທີ່ມີຄວາມເຈັບປວດຫຼາຍ ແລະ ປິ່ນປົວບໍ່ໄດ້ ຕາຍຢ່າງສະຫງົບ, ການຕາຍຢ່າງບໍ່ທໍລະມານ) ອີງຕາມການລົງຄະແນນສຽງໃນວາລະທີ 3; ເນື້ອໃນທີ່ສຳຄັນຂອງກົດໝາຍລະບຸວ່າ “ເປັນສິດທິຂອງບຸກຄົນໃນການຕັດສິນໃຈທີ່ຈະຈົບຊີວິດຢ່າງສະຫງົບ ແລະ ມີກຽດ ຜ່ານຂະບວນການທີ່ຖືກຕ້ອງ ແລະ ເໝາະສົມຕາມຫຼັກການທາງການແພດ”.

ການເຄື່ອນໄຫວທີ່ເກີດຂຶ້ນນີ້ເຮັດໃຫ້ກູບາເປັນປະເທດທີສອງໃນອາເມລິກາລາຕິນ ທີ່ອະນຸຍາດການກາລຸນຍະຄາດ ຕໍ່ຈາກໂກລົມບີ. ຂະນະທີ່ປະເທດອື່ນໆໃນໂລກທີ່ມີກົດໝາຍອະນຸຍາດການກາລຸນຍະຄາດ ປະກອບມີ ໂຮນລັງ, ສະວິດ, ລຸກຊຳບວກ, ການາດາ, ອົດສະຕຣາລີ, ແອັດສະປາຍ, ເຢຍລະມັນ, ນູແວນເຊລັງ ແລະ ບາງລັດໃນສະຫະລັດອາເມລິກາ; ໂດຍບາງປະເທດໃນກຸ່ມນີ້ອະນຸຍາດໃຫ້ຄົນເຈັບທີ່ມີອາການເຈັບປວດຮຸນແຮງ ສາມາດເຂົ້າຮັບກາລຸນຍະຄາດໄດ້, ບໍ່ຈຳເປັນຕ້ອງເປັນຄົນເຈັບທີ່ຢູ່ໃນໄລຍະສຸດທ້າຍກໍໄດ້.

**ແຫຼ່ງຂ່າວ: REUTERS**



# EU ເຫັນດີປະຕິຮູບກົດໝາຍຜູ້ລີ້ໄພຄັ້ງປະຫວັດສາດ



*ສະຫະພາບເອີຣົບ(ອີຢູ) ເຫັນດີຈະຍົກເລີກກົດໝາຍວ່າດ້ວຍຜູ້ລີ້ໄພ ເຊິ່ງລວມເຖິງການເພີ່ມສະຖານທີ່ກັກກັນບໍລິເວນຊາຍແດນ ແລະ ການເນລະເທດອອກຈາກປະເທດທີ່ໄວຂຶ້ນ, ແຕ່ອົງການການກຸສົນເພື່ອຄົນອົບພະຍົບຈຳນວນຫຼາຍ ໄດ້ປະນາມການປ່ຽນແປງດັ່ງກ່າວວ່າເປັນ “ອັນຕະລາຍ” ແລະ “ໂຫດຮ້າຍ”.*

ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງບຣຸກແຊນ, ປະເທດແບນຊິກ ເມື່ອວັນທີ 21 ທັນວາ 2023 ວ່າ: ລັດຖະບານ, ເຈົ້າໜ້າທີ່ ແລະ ສະມາຊິກລັດຖະສະພາເອີຣົບ (ອີພີ) ຂອງອີຢູ ໄດ້ຊົມເຊີຍຂໍ້ຕົກລົງເບື້ອງຕົ້ນກ່ຽວກັບຂໍ້ຕົກລົງໃໝ່ວ່າດ້ວຍການລີ້ໄພ ແລະ ການອົບພະຍົບ ເປັນ “ຂໍ້ຕົກລົງຄັ້ງປະຫວັດສາດ” ໂດຍກ່າວວ່າ ອີຢູປັບປຸງຂັ້ນຕອນຕ່າງໆເພື່ອຮັບມືກັບຈຳນວນຜູ້ເດີນທາງເຂົ້າປະເທດຢ່າງຜິດປົກກະຕິທີ່ເພີ່ມຂຶ້ນ ໄປຄຽງຄູ່ກັບການຮັກສາຄວາມເຄົາລົບຕໍ່ສິດທິມະນຸດ.

ການປະຕິຮູບກົດໝາຍຂ້າງເທິງ ໄດ້ເກີດຂຶ້ນຫຼັງຈາກການເຈລະຈາທີ່ແກ່ຍາວລະຫວ່າງບັນດາປະເທດສະມາຊິກ ກັບຝ່າຍນິຕິບັນຍັດຂອງອີຢູ ເຊິ່ງເຖິງວ່າຍັງບໍ່ທັນໄດ້ຮັບການຮັບຮອງຢ່າງເປັນທາງການຈາກຄະນະມົນຕີເອີຣົບ (European Council) ແລະ ອີພີ, ແຕ່ຄາດວ່າການຈັດຕັ້ງປະຕິບັດຈະສຳເລັດກ່ອນເດືອນມິຖຸນາ 2024.

ການປະຕິຮູບກົດໝາຍວ່າດ້ວຍຜູ້ລີ້ໄພຂອງອີຢູ ລວມມີການກວດສອບຜູ້ເດີນທາງເຂົ້າປະເທດທີ່ຜິດປົກກະຕິວ່ອງໄວຂຶ້ນ, ການສ້າງສູນກັກກັນບໍລິເວນຊາຍແດນ, ການເລັ່ງສົ່ງຜູ້ຂໍລີ້ໄພທີ່ຖືກປະຕິເສດກັບປະເທດ ແລະ ກົນໄກທີ່ເອກະພາບໃນການກຳຈັດແຮງກົດດັນຈາກປະເທດທາງພາກໃຕ້ ທີ່ປະສົບກັບການຫຼັ່ງໄຫຼເຂົ້າມາຂອງພວກອົບພະຍົບຈຳນວນຫຼາຍ; ຍິ່ງໄປກວ່ານັ້ນ, ຍັງເລັ່ງໃຫ້ການຄັດເລືອກ ແລະ ກວດສອບຜູ້ຂໍລີ້ໄພໄວຂຶ້ນເຮັດໃຫ້ຜູ້ທີ່ຖືວ່າບໍ່ມີສິດ ຖືກສົ່ງກັບຄືນປະເທດຂອງພວກເຂົາຫຼືປະເທດທາງຜ່ານໄດ້ຢ່າງວ່ອງໄວ ໂດຍຂັ້ນຕອນດັ່ງກ່າວຈະມີຜົນກັບຜູ້ອົບພະຍົບເຂົ້າປະເທດຢ່າງຜິດປົກກະຕິ ເຊິ່ງມາຈາກປະເທດທີ່ຄຳຮ້ອງຂໍລີ້ໄພຂອງປະຊາຊົນຖືກປະຕິເສດຫຼາຍກວ່າ 80% ຂອງຈຳນວນຄຳຮ້ອງທັງໝົດ.

ເຖິງຢ່າງໃດກໍຕາມ, ມີຫຼາຍສິບອົງການການກຸສົນຊ່ວຍເຫຼືອຄົນອົບພະຍົບ ລວມທັງອົງການນິລະໂທດກຳສາກົນ (Amnesty International), Oxfam, Caritas ແລະ Save the Children ຕຳນິຕິຕຽນການປ່ຽນແປງກົດໝາຍການລີ້ໄພຂອງອີຢູ ໂດຍລະບຸວ່າການເຄື່ອນໄຫວດັ່ງກ່າວຈະສ້າງ “ລະບົບທີ່ໂຫດຮ້າຍ”.

## ເຝົ້າເບິ່ງ ໄດ້ຍິນ ໄດ້ຍິນ (ເຝົ້າໄວ້ ໄດ້ຍິນຢາງ)

❖ ວິເສດ ສະແຫວງສຶກສາ

# ນະໂຍບາຍສົ່ງເສີມການຜະລິດພາຍໃນ ແລະ ປ້ອງກັນແຮງງານຣົ່ວໄຫຼ

ເລື່ອງທີ່ຜວມຊິເລົ່າສູ່ຟັງນີ້ ເກີດຂຶ້ນຢູ່ສອງປະເທດແຍກກັນ ຄືເລື່ອງກ່ຽວກັບນະໂຍບາຍ ສົ່ງເສີມການຜະລິດພາຍໃນນັ້ນ ເກີດຂຶ້ນຢູ່ປະເທດ ອິນໂດເນເຊຍ ສ່ວນນະໂຍບາຍປ້ອງກັນບໍ່ໃຫ້ແຮງງານ (ໂດຍສະເພາະແມ່ນແຮງງານຂອງຊາວໜຸ່ມ) ອອກໄປເຮັດວຽກຢູ່ຕ່າງປະເທດນັ້ນ ເກີດຢູ່ປະເທດໂປໂລຍ ຫຼື ໂປແລນ.

ຫົວຂໍ້ທີ 1 ມີລາຍລະອຽດດັ່ງຕໍ່ໄປນີ້ຄື: ມີຂ່າວວ່າໃນທ້າຍປີ 2019 ທາງການຂອງອິນໂດເນເຊຍ ໄດ້ປະກາດໃຊ້ມາດຕະການເພີ່ມພາສີນຳເຂົ້າສິນຄ້າຕັດຫຍິບຈາກຕ່າງປະເທດ ສູງເຖິງ 67,7% ທາງກະຊວງການເງິນ ອິນໂດເນເຊຍ ໄດ້ໃຫ້ຮູ້ວ່າ ພາສີຊົ່ວຄາວນີ້ ມີເປົ້າໝາຍເພື່ອປົກປ້ອງຂະແໜງການອຸດສະຫະກຳທີ່ສຳຄັນຢູ່ພາຍໃນປະເທດ ໄປພ້ອມໆກັບການສົ່ງເສີມຜະລິດຕະພັນພາຍໃນ.ຢູ່ປະເທດລາວພວກເຮົາແຕ່ໃດໆມາກໍເຄີຍເວົ້າຄຳຂວັນ “ລາວເຮັດລາວໃຊ້ ລາວໄດ້ລາວຈະເລີນ” ແຕ່ການຜັນຂະຫຍາຍຄຳຂວັນນີ້ໃຫ້ເກີດດອກອອກຜົນນັ້ນ ຍັງເຮັດໄດ້ໜ້ອຍທີ່ສຸດ ແລະ ຫາກໍມາຈິງຈັງຕັ້ງໜ້າໃນໄລຍະພວກເຮົາມີບັນຫາຝືດເຄືອງທາງເສດຖະກິດໃນເວລານີ້ລະ. ຢູ່ອິນໂດເນເຊຍ ນັ້ນ ເຂົາຈິງຈັງເລື່ອງການນຳໃຊ້ ຫຼື ຊົມໃຊ້ຜະລິດຕະພັນພາຍໃນມາແຕ່ດົນແລ້ວ ຕົວຢ່າງ ເຂົາໄດ້ກຳນົດໃຫ້ບໍລິສັດຜະລິດລົດໃຫ່ຍຂອງຕ່າງປະເທດໃນ ອິນໂດເນເຊຍ ນຳໃຊ້ວັດຖຸດິບທີ່ຜະລິດຢູ່ພາຍໃນເປັນສ່ວນປະກອບຂອງລົດແຕ່ລະຄັນບໍ່ໃຫ້ຫຼຸດ 60% ດ້ວຍວິທີນີ້, ອິນໂດເນເຊຍ ສາມາດເກັບກ່ຽວມູນຄ່າເພີ່ມຈາກວັດຖຸດິບພາຍໃນ ແລະ ໄດ້ທັງວຽກເຮັດງານທຳຕື່ມ.

ມາດຕະການເກັບພາສີຜະລິດຕະພັນຕັດຫຍິບຈາກຕ່າງປະເທດນັ້ນ, ທາງການ ອິນໂດເນເຊຍ ໄດ້ກຳນົດຢ່າງຄັກແນ່ວ່າ ຕ້ອງເປັນຜະລິດຕະພັນ ເສັ້ນຝ້າຍປະສົມ ແລະ ເສັ້ນຝ້າຍທຽມ, ຜະລິດຕະພັນຜ້າກັ້ງ, ຜ້າກັນແດດ, ມຸ້ງສິນຄ້າຕົບແຕ່ງພາຍໃນ ແລະ ອື່ນໆ ລວມແລ້ວມີ 121 ລາຍການ. ມາດຕະການພາສີຊົ່ວຄາວນີ້ ມີກຳນົດປະຕິບັດພຽງ 200 ວັນເທົ່ານັ້ນ. ເລື່ອງທີ່ສອງແມ່ນກ່ຽວກັບ ທາງການ ປະເທດໂປໂລຍ ໄດ້ອອກນະໂຍບາຍໃໝ່ເພື່ອປ້ອງກັນບໍ່ໃຫ້ແຮງງານ ໂດຍສະເພາະແມ່ນແຮງງານຊາວໜຸ່ມ ຫຼັ່ງໄຫຼອອກໄປເຮັດວຽກຢູ່ຕ່າງປະເທດ ອັນຈະພາໃຫ້ຂາດແຄນແຮງງານຢູ່ພາຍໃນ. ນະໂຍບາຍດັ່ງກ່າວໄດ້ອອກມາໃນຮູບການຍົກເວັ້ນພາສີລາຍຮັບສຳລັບຊາວໜຸ່ມໂດຍສະເພາະ ຊຶ່ງເລີ່ມປະຕິບັດຢູ່ປະເທດໂປໂລຍ ມີເມື່ອປະມານ 5 ປີຜ່ານມາ. ນະໂຍບາຍ ທີ່ວ່ານີ້ ເຮັດໜ້າທີ່ສົ່ງເສີມຊີວິດການເປັນຢູ່ຂອງຄົນໃນໄວໜຸ່ມໃຫ້ສາມາດກຸ້ມຕົນເອງ ເພື່ອໃຫ້ປີກກ້າຂາແຂງ ເປັນກຳລັງແຮງໃນການພັດທະນາປະເທດຊາດ. ເນື້ອໃນຕົ້ນຕໍຂອງນະໂຍບາຍນີ້ ຄືຍົກເວັ້ນພາສີລາຍຮັບສຳລັບຄົນໜຸ່ມທີ່ມີອາຍຸຕ່ຳກວ່າ 26 ປີ ທີ່ມີລາຍຮັບຕ່ຳກວ່າ 85 ພັນຊວດຕີ ຕໍ່ປີ (ຊວດຕີແມ່ນສະກຸນເງິນໂປໂລຍ). 85 ພັນຊວດຕີນັ້ນ ເທົ່າກັບປະມານ 192 ລ້ານກີບ ຕາມອັດຕາແລກປ່ຽນໃນປີ 2019. ລາຍຮັບ 85 ພັນຊວດຕີ ນີ້ ບໍ່ແມ່ນລາຍຮັບຂັ້ນຕ່ຳ, ສ່ວນລາຍຮັບຂັ້ນຕ່ຳຂອງຄົນໂປໂລຍໃນເວລານັ້ນ ແມ່ນ 60 ພັນຊວດຕີຕໍ່ປີ. ການທີ່ທາງການ ໂປໂລຍ ມີນະໂຍບາຍຍົກເວັ້ນ ພາສີລາຍຮັບຂອງຊາວໜຸ່ມທີ່ບໍ່ແມ່ນລາຍຮັບຂັ້ນຕ່ຳນີ້ ຕົ້ນຕໍແມ່ນເພື່ອຈ່ອງຊາວໜຸ່ມທີ່ມີຄວາມຮູ້ຄວາມສາມາດ ແລະ ທັກສະ ບໍ່ໃຫ້ໂຢດໄປເຮັດວຽກຢູ່ຕ່າງປະເທດທີ່ຈະກໍ່ໃຫ້ເກີດສະພາບສະໝອງໄຫຼ. ຢູ່ບັນດາປະເທດສະຫະພາບເອີຣົບ ນັ້ນ ຕະຫຼາດແຮງງານມີລັກສະນະເສລີ, ຖ້າຢູ່ບ່ອນໃດລາຍຮັບສູງ ແຮງງານຈາກປະເທດຕ່າງໆກໍຈະຫຼັ່ງໄຫຼໄປເຮັດວຽກຢູ່ບ່ອນນັ້ນ. ນີ້ລະຄືສິ່ງທີ່ທາງການປະເທດໂປໂລຍ ຢ້ານທີ່ສຸດ. ຢູ່ລາວພວກເຮົາເດລະ ? ດຽວນີ້ຫຼາຍໆບ່ອນ ລວມທັງຮ້ານອາຫານຕ່າງກໍເລີ່ມຈົ່ມເລື່ອງຂາດແຮງງານແລ້ວ!.

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED




# ໃຜເປັນນາຍ

#ບ່າວກະບື

ມື້ນຶ່ງ ໃນກອງປະຊຸມພະນັກງານວິຊາການ, ທ່ານເຫຼັກກ້າອອກປາກຈົ່ມວ່າ ບໍ່ມີໃຜສະແດງຄວາມເຄົາລົບຕໍ່ລາວ "ພໍເລີກກອງປະຊຸມ, ລາວກໍອອກຫ້ອງການໄປແລະກັບເຂົ້າມາພ້ອມດ້ວຍປ້າຍນ້ອຍແຜ່ນໜຶ່ງ ມີເນື້ອໃນວ່າ: "ຂ້າພະເຈົ້າເປັນນາຍ" ແລ້ວລາວກໍເອົາປ້າຍນັ້ນໄປຕິດໄວ້ຝາປະຕູຫ້ອງການ. ຕໍ່ມາໃນມື້ນັ້ນ, ຫຼັງກັບຈາກກິນເຂົ້າທ່ຽງ, ລາວພົບວ່າມີຄົນເອົາເຈ້ຍຂໍ້ຄວາມມາຕິດນຳປ້າຍລາວໄວ້, ມີເນື້ອໃນວ່າ: ເມຍຂອງທ່ານໂທມາ. ເພິ່ນຕ້ອງການປ້າຍຂອງເພິ່ນຄືນ".

# WHO'S THE BOSS

*# BAOKBU*

Mr. Lekka was complaining at a staff meeting the other daythat he wasn't getting any respect. After the meeting, he went out and returned with a small sign that read: "I'm the boss. "He taped it to his office door.

Later that day when he returned from lunch, he found thatsomeone had taped a note to the sign that said: "Your wife called. She wants her sign back!".

## ຕາມພາສາ ກາຕູນ




● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ກົງທະນູຄຳ ພິພັດເສລີ
ທ່ານ ນາງ ສຸພາວັນ ທອນສະນິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ